ສະບັບທີ 01, ຊຸດທີ 01 (2026); 47- 58

ວາລະສານວິທະຍາສາດການເມືອງ-ການປົກຄອງ

www.jnappa.lci.la; ISSN: 3107-1163; E-ISSN: 3107-1171

DOI: https://doi.org/10.71026/jnappa.2026.010105



ແນວຄິດໄກສອນພົມວິຫານກ່ຽວກັບການສົມທົບແໜ້ນນໍ້າໃຈຮັກຊາດອັນດູດດື່ມກັບນໍ້າໃຈສາກົນກຳມາຊີບອັນແທ້ຈິງ ໃນການກ້າວຂຶ້ນສູ່ສັງຄົມນິຍົມຢູ່ປະເທດເຮົາ

Kaysone Phomvihane's thoughts about combining a passionate patriotism with a genuine international spirit are the true driving force in advancing towards socialism in our country.

ພອນວິໄລ ພົມວຽງໄຊ; ສະຖາບັນຫານເມືອງ ແລະ ການປົກຄອງແຫ່ງຊາດ

Email: phonvilay.nappa@gmail.com

ປະຫວັດຫົວຂໍ້ຄົ້ນຄວ້າ

ໄດ້ຮັບ: 30 ພຶດສະພາ 2025

ໄດ້ຮັບພາຍຫຼັງປັບປຸງ: 10 ກັນຍາ2025

ຖືກຮັບຮອງ: 15 ພະຈິກ 2025

ຈັດພິມອອນລາຍ: 25 ກຸມພາ 2026

ບົດຄັດຫຍໍ້

ແນວຄິດໄກສອນພົມວິຫານກ່ຽວກັບການສົມທົບແໜ້ນນໍ້າໃຈຮັກຊາດອັນດູດດື່ມກັບນໍ້າໃຈສາກົນກຳມາຊີບອັນແທ້ຈິງໃນການກ້າວຂຶ້ນສັງຄົມນິຍົມແມ່ນບັນດາແນວຄິດໃນການສ້າງ, ຮັດແໜ້ນຄວາມສາມັກຄີຂອງກຳລັງປະຕິວັດລາວກັບບັນດາຊາວກຳມາຊີບແລະຊາວຜູ້ອອກແຮງງານໃນຂະບວນການຕໍ່ສູ້ປົດປ່ອຍຊາດ, ປົດປ່ອຍຊົນຊັ້ນກຳມະກອນຢູ່ບັນດາປະເທດທີ່ລຸກຮືຂຶ້ນຕໍ່ສູ້ຕ້ານລັດທິລ່າເມືອງຂຶ້ນ, ຈັກກະພັດຜູ້ຮຸກຮານ, ກົດຂີ່ຂູດຮີດ ພ້ອມທັງບັນດາກຳລັງທີ່ກ້າວໜ້າຕໍ່ສູ້ເພື່ອສັນຕິພາບໃນທົ່ວໂລກ. ແນວຄິດດັ່ງກ່າວ ຂອງເພິ່ນໄດ້ມີພື້ນຖານມາຈາກລັດທິມາກ-ເລນິນ, ເງື່ອນໄຂສະພາບແວດລ້ອມຂອງຂະບວນການປະຕິວັດໃນພາກພື້ນ ແລະສາກົນ, ນໍ້າໃຈຮັກຊາດອັນດູດດື່ມ ໂດຍສະເພາະແນວຄິດປົດປ່ອຍຊາດອອກຈາກແອກປົກ ຄອງຂອງຕ່າງດ້າວ ແລະນຳເອົາຄວາມສຸກຄວາມຈະເລີນມາສູ່ປະເທດຊາດ, ປະຊາຊົນ; ຜ່ານມາການໝູນໃຊ້ແນວຄິດດັ່ງກ່າວ ຂອງປະທານໄກ ສອນ ພົມວິຫານ ໄດ້ຮັບການໝູນໃຊ້ເຂົ້າໃນການສ້າງປະເທດຊາດຕາມທິດກ້າວຂຶ້ນສັງຄົມນິຍົມຢູ່ປະເທດເຮົາ ມີຜົນສຳເລັດທີ່ແນ່ນອນ.ພ້ອມກັນນັ້ນ ກໍຈຳເປັນຕ້ອງໄດ້ເສີມຂະຫຍາຍຄຸນຄ່າແນວຄິດດັ່ງກ່າວຂອງເພິ່ນເຂົ້າໃນການພັດທະນາປະເທດຕາມແນວທາງທີ່ພັກເຮົາກຳນົດໄວ້ຢ່າງຕັ້ງໜ້າ.

ຄຳສັບສຳຄັນ: ນໍ້າໃຈຮັກຊາດ, ນໍ້າໃຈສາກົນກຳມາຊີບ, ສັງຄົມນິຍົມ.

Abstract

Kaysone Phomvihane's concept on combining the spirit of absolute patriotism with the spirit of true internationalism in the path towards socialist country is the ideology for building and strengthening the solidarity of the revolutionary forces of Laos with the workers and workforce in the struggle for national liberation, the liberation of the working class in countries that have risen up to fight against colonialism, imperialism, aggression, and exploitation, as well as with progressive forces fighting for peace around the world. This ideology is inherited based on Marxism-Leninism, the situations of the regional and international revolutionary movement, and his captivating patriotism, especially the concept of liberating the nation from foreign occupation and bringing happiness and prosperity to the nation and people; in the past, the application of this concept by President Kaysone PHOMVIHANE has been applied for building a nation in the direction of the socialist path in our country with certain achievements. At the same time, it is necessary to actively promote the value of this concept in developing the country along the socialist direction determined by the People's Revolutionary Party of Laos.

Key words: Patriotism, Internationalism, Socialism.

I. ພື້ນຖານບ່ອນອີງແຫ່ງການກຳເນີດແນວຄິດ ໄກສອນ ພົມວິຫານ ກ່ຽວກັບການສົມທົບແໜ້ນ ນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊີບອັນແທ້ຈິງ ໃນການກ້າວຂຶ້ນສັງຄົມນິຍົມ.

1. ພື້ນຖານທິດສະດີມາກ - ເລນິນ ກ່ຽວກັບການສົມທົບແໜ້ນນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊີບອັນແທ້ຈິງ ໃນການກ້າວຂຶ້ນສັງຄົມນິຍົມ.

ຕາມທັດສະນະຫຼັກມູນທິດສະດີມາກ - ເລນິນ, ລັດທິສາກົນກຳມະຊີບ ຫຼື ເອີ້ນອີກຢ່າງໜຶ່ງວ່າ ລັດທິສາກົນຂອງຊົນຊັ້ນກຳມະກອນ ຫຼື ລັດທິສາກົນສັງຄົມນິຍົມແມ່ນບັນດາຫຼັກການ, ທິດນຳການເຄື່ອນໄຫວ ໃນຂະບວນວິວັດຈັດຕັ້ງປະຕິບັດພາລະກຳປະຫວັດສາດໃນທົ່ວໂລກ ຂອງຊົນຊັ້ນກຳມາກອນ. ມັນໄດ້ສັງລວມເປັນລະບົບທິດສະດີອັນໜຶ່ງ ມີທີ່ຕັ້ງສຳຄັນໃນທິດສະດີມາກ - ເລນິນ ແລະ ເປັນຫຼັກການສຳຄັນແຖວໜ້າ ຂອງການພົວພັນ ລະຫວ່າງ ບັນດາພັກກອມມູນິດ. ຄວາມສາມັກຄີ, ຄວາມເປັນເອກະພາບ ກ່ຽວກັບເຈດຈຳນົງ ແລະ ຖັນແຖວ ຂອງຊົນຊັ້ນກຳມະກອນ ເປັນເນື້ອໃນພື້ນຖານ, ຫຼັກການແຖວໜ້າ ຂອງລັດທິສາກົນກຳມາຊີບ ໃນຫຼັກມູນທິດສະດີ ຂອງພວກເພິ່ນ.

ໃນໄລຍະ ກ. ມາກ ແລະ ฟ. ອັງແກນ ເຄື່ອນໄຫວຄົ້ນຄວ້າ ພຶດຕິກຳ ແລະ ນຳພາຂະບວນການຕໍ່ສູ້ ຂອງຊົນຊັ້ນກຳມະກອນ ແມ່ນໄລຍະລັດທິທຶນນິຍົມແກ້ງແຍ້ງເສລີ, ຍັງບໍ່ທັນປາກົດມີບັນຫາຊົນຊາດ ແລະ ເມືອງຂຶ້ນເທື່ອ. ດ້ວຍເຫດນັ້ນ, ก. มาก ແລະ ฟ. ອັງແກນ ພຽງແຕ່ສະເໜີເຖິງຄວາມສາມັກຄີ ລະຫວ່າງກຳມະກອນ - ຊາວນາ ໃນແຕ່ລະປະເທດເທົ່ານັ້ນ, ໂດຍໄດ້ເຊີດຊູຄຳຂວັນທີ່ຖືເປັນຄຳ ຮຽກຮ້ອງ ແລະ ກ່ຳເປັນຄຳສັ່ງໃນການເຄື່ອນໄຫວ ຂອງບັນດາຊາວ ກອມມູນິດ ໃນໂລກທັງໝົດ: *"ກຳມະກອນໃນທົ່ວໂລກ ຈົ່ງສາມັກຄີ ກັນເຂົ້າ!"* (มาก & อังแกน, 2010, ໜ້າ 782) ເພື່ອໂຄ່ນລົ້ມ ລັດທິທຶນນິຍົມ. ນີ້ແມ່ນຈຸດທີ່ບັນດາຜູ້ຄົ້ນຄວ້າ ກ່ຽວກັບລັດທິມາກ ລ້ວນແຕ່ເປັນເອກະພາບໃນເວລານຳສະເໜີເຖິງເນື້ອໃນ ຂອງລັດທິ ສາກົນກຳມາຊີບ. ພາຍຫຼັງຕໍ່ມາ (ໃນຊຸມປີ 60 ຂອງສະຕະວັດທີ 19), ໃນເວລາທີ່ລັດທິທຶນນິຍົມ ໄດ້ຂະ ຫຍາຍຕົວສູ່ລັດທິຈັກກະພັດ , ບັນຫາຊົນຊາດ ແລະ ເມືອງຂຶ້ນ ຈຶ່ງໄດ້ປາກົດຕົວຂຶ້ນ, ການກົດຂີ່ຊົນ ຊັ້ນ ແລະ ປະຊາຊາດໄດ້ເກີດຂຶ້ນໃນທົ່ວໂລກ. ດັ່ງນັ້ນ, อ.อิ. ເລນິນ ຜູ້ສືບທອດ, ປົກປ້ອງ ແລະ ເສີມຂະຫຍາຍທິດສະດີລັດທິມາກ ກ່ຳໄດ້

ເພີ່ມເຕີມເສີມຂະຫຍາຍຄຳຂວັນ ຂະບວນການຕໍ່ສູ້ຂອງຊົນຊັ້ນກຳມາຊີບທີ່ ກ. ມາກ ແລະ ฟ. ອັງແກນ ໄດ້ຍົກຂຶ້ນ ກາຍມາເປັນ: *"ຊາວກຳມາຊີບໃນທົ່ວໂລກ ແລະ ບັນດາຊົນຊາດທີ່ຖືກກົດຂີ່ ຈົ່ງ ສາມັກຄີກັນເຂົ້າ!"*, ໂດຍເພີ່ນໄດ້ຊີ້ແຈງວ່າ: "ບໍ່ມີຄວາມພະຍາຍາມ ສະໝັກໃຈ ກ້າວໄປເຖິງການສຳພັນທະພາບ ແລະ ຄວາມເປັນເອກະ ພາບ ຂອງຊົນຊັ້ນກຳມາຊີບ, ຖັດໄປແມ່ນຂອງມະຫາຊົນຊາວຜູ້ ອອກແຮງງານທັງໝົດ ທີ່ຂຶ້ນກັບບັນດາປະເທດ ແລະ ບັນດາຊົນ ຊາດໃນທົ່ວໂລກ, ແມ່ນບໍ່ອາດເອົາຊະນະລັດທິທຶນນິຍົມຢ່າງສົມບູນ ໄດ້" (ເລນິນ, 1980, ໜ້າ 206). ພ້ອມດຽວກັນນັ້ນ, ເມື່ອເວົ້າ ເຖິງຄວາມອາດສາມາດ ຂອງບັນດາປະເທດທີ່ດ້ອຍພັດທະນາ ກ້າວ ຂຶ້ນສັງຄົມນິຍົມແລ້ວ ບັນດາຜູ້ກໍ່ຕັ້ງລັດທິສັງຄົມນິຍົມວິທະຍາສາດ ໄດ້ໃຫ້ທັດສະນະວ່າ: ພວກເຮົາພຽງແຕ່ສາມາດໃຫ້ຄຳຕອບທີ່ ເປັນສົມມຸດຖານອັນຟາງໆເທົ່ານັ້ນ, ເພາະວ່າ ຕາມທັດສະນະພວກ ເພີ່ນແລ້ວ "ການປະຕິວັດກອມມູນິດນິຍົມ ບໍ່ພຽງແຕ່ຈະມີ ລັກສະນະຊາດເທົ່ານັ້ນ ແຕ່ພ້ອມດຽວກັນ ກໍ່ຈະເກີດຂຶ້ນຢູ່ບັນດາ ປະເທດທີ່ມີຄວາມສີວິໄລ, ໜ້ອຍທີ່ສຸດກໍ່ແມ່ນຢູ່ອັງກິດ, ອາເມຣິກາ , ຝຣັ່ງ ແລະ ເຢຍລະມັນ..." (ມາກ & ອັງແກນ, 1995, ໜ້າ 472). ແຕ່ວ່າໃນເງື່ອນໄຂ, ສະພາບແວດລ້ອມຂະບວນການຕໍ່ສູ້ ປະຕິວັດ ຢູ່ຣັດເຊຍ, ວ.ອ. ເລນິນ ໄດ້ຢືນຢັນວ່າ: "ທັງໝົດບັນດາ ປະຊາຊາດ ລ້ວນແຕ່ຈະໄປເຖິງສັງຄົມນິຍົມ, ນັ້ນແມ່ນສິ່ງທີ່ບໍ່ອາດ ຫຼີກລ່ຽງໄດ້, ແຕ່ວ່າເຂົາເຈົ້າຈະໄປເຖິງສັງຄົມນິຍົມ ດ້ວຍເສັ້ນທາງທີ່ ແຕກຕ່າງກັນ"(ເລນິນ, 2006, ໜ້າ 160]. ຈາກທັດສະນະດັ່ງກ່າວ ວ.ອ. ເລນິນ ຍັງຊີ້ໃຫ້ເຫັນເຖິງບັນດາໜ້າທີ່, ເງື່ອນ ໄຂຕົວຈິງ ເພື່ອ ກ້າວຂຶ້ນສັງຄົມນິຍົມ ຄື: ເສັ້ນທາງຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ (ທາງກົງ ແລະ ທາງອ້ອມ). ຕໍ່ກັບບັນດາປະຊາຊາດທີ່ບໍ່ທັນຜ່ານ ໄລຍະຂະຫຍາຍຕົວຂອງທຶນນິຍົມ ກໍ່ສາມາດກ້າວຂຶ້ນສັງຄົມນິຍົມ ໄດ້ ແຕ່ຕ້ອງປະກອບມີ 2 ປັດໄຈສຳຄັນ ຄື: ໜຶ່ງ, ມີພັກຂອງຊົນຊັ້ນ ກຳມະກອນເປັນຜູ້ນຳພາ; ສອງ, ໄດ້ຮັບການຊ່ວຍເຫຼືອຈາກບັນດາ ປະເທດສັງຄົມນິຍົມອ້າຍນ້ອງ.

ເມື່ອຄົ້ນຄວ້າສຶກສາຢ່າງເລິກເຊິ່ງ ກ່ຽວກັບບັນຫານີ້ຢູ່ໃນທິດ ສະດີມາກ - ເລນິນ, ພວກເຮົາສາມາດເຫັນໄດ້ເຖິງທາດແທ້ ຂອງ ລັດທິສາກົນກຳມາຊີບ ທີ່ສະແດງຢ່າງຈະແຈ້ງໃນ 5 ເນື້ອໃນ ກ່ຽວ ກັບຄວາມເປັນເອກະພາບທີ່ຊົນຊັ້ນກຳມະກອນ ໃນທົ່ວໂລກ ຕ້ອງ ບັນລຸເຖິງ ນັ້ນຄື: ຄວາມເປັນເອກະພາບທາງດ້ານຜົນປະໂຫຍດ, ຄວາມເປັນເອກະພາບທາງດ້ານແນວຄິດ, ຄວາມເປັນເອກະພາບທາງ ດ້ານຈຸດໝາຍ, ຄວາມເປັນເອກະພາບທາງດ້ານການຈັດຕັ້ງ ແລະ ຄວາມເປັນເອກະພາບທາງດ້ານການເຄື່ອນ ໄຫວ. ດັ່ງທີ່ ວ.ອ. ເລນິນ ໄດ້ຢືນຢັນວ່າ: "ການປົກຄອງຂອງນາຍທຶນ ແມ່ນມີລັກສະ ນະ ສາກົນ. ດ້ວຍເຫດນັ້ນ, ການຕໍ່ສູ້ຂອງຊົນຊັ້ນກຳມະກອນ ຢູ່ບັນດາ ປະເທດທັງໝົດເພື່ອປົດປ່ອຍຕົນເອງ, ຈະສາມາດປະສົບຜົນສຳເລັດ ໄດ້ ກໍ່ຕໍ່ເມື່ອກຳມະກອນໄດ້ພ້ອມໃຈກັນຕໍ່ສູ້ຕ້ານຄືນນາຍທຶນສາກົນ" (ເລນິນ, 2005, ໜ້າ 115]. ບັນດາທັດສະນະດັ່ງກ່າວ ທີ່ບັນດາ ນັກລາຊິກ ຜູ້ກໍ່ຕັ້ງລັດທິມາກ - ເລນິນ ຍົກຂຶ້ນມານັ້ນ ໄດ້ຊີ້ໃຫ້ເຫັນ ຢ່າງຈະແຈ້ງເຖິງລັກສະນະຄວາມຈຳເປັນພາວະວິໄສ ແຫ່ງການ ເຕົ້າໂຮມຄວາມສາມັກຄີ ຂອງຂະບວນການຕໍ່ສູ້ຊົນຊັ້ນກຳມະກອນໃນ ທົ່ວໂລກ ເພື່ອໂຄ່ນລົ້ມລະບອບທຶນນິຍົມ ແລະ ກໍ່ສ້າງສັງ ຄົມໃໝ່ - ສັງຄົມນິຍົມ ແລະ ກອມມູນິດນິຍົມ.

ບົນເສັ້ນທາງແຫ່ງການຊອກຫາເສັ້ນທາງຕໍ່ສູ້ ເພື່ອກູ້ຊາດເປັນ ເວລາເກືອບສິບປີ, ຫວຽນເຕົາແຫ່ງ (ໂຮ່ຈິມິນ) ໄດ້ຜ່ານຂະບວນ ວິວັດການອອກແຮງງານ, ສຶກສາຄົ້ນ ຄວ້າທິດສະດີ ແລະ ສຳຫຼວດ ພຶດຕິກຳ ຢູ່ຫຼາຍປະເທດໃນໂລກ, ຮ່ວມດຳລົງຊີວິດໃນໝູ່ຊາວຜູ້ ອອກແຮງງານ ແລະ ຂະບວນການຕໍ່ສູ້ຕ້ານການກົດຂີ່ຂູດຮີດ, ຂະ ບວນການຕໍ່ສູ້ປົດປ່ອຍຊາດ, ຂະບວນການກອມມູນິດ ແລະ ກຳ ມະກອນສາກົນໃນຫຼາຍປະເທດ, ເພີ່ນສາມາດຮັບຮູ້ໄດ້ຢ່າງຈະແຈ້ງວ່າ ບັນຫາການປົດປ່ອຍຊາດ ແລະ ປົດປ່ອຍຄົນ ແມ່ນຄວາມຈຳເປັນ ບໍ່ ສະເພາະແຕ່ຕໍ່ກັບປະເທດຫວຽດນາມ ເທົ່ານັ້ນ, ຫາກຍັງຕໍ່ກັບບັນດາ ຊົນຊາດທີ່ເປັນເມືອງຂຶ້ນ ແລະ ປະຊາຊົນຖືກກົດຂີ່ໃນທົ່ວໂລກນຳ ອີກ. ດ້ວຍເຫດນັ້ນ, ປະທານ ໂຮ່ຈິມິນ ຈຶ່ງໄດ້ສຶກສາຄົ້ນຄວ້າລັດທິ ມາກ - ເລນິນ ຢ່າງເລິກເຊິ່ງ ແລະ ສາມາດຄົ້ນພົບທ່າອ່ຽງ ຂະຫຍາຍຕົວໃໝ່ ຂອງຍຸກສະໄໝ, ເພີ່ນໄດ້ຢືນຢັນວ່າ:"ຢາກກອບກູ້ ປະເທດ ແລະ ປົດປ່ອຍຊາດ ບໍ່ມີເສັ້ນທາງອື່ນໃດນອກຈາກເສັ້ນທາງ ປະຕິວັດກຳມາຊີບ" (ໂຮ່ຈິມິນ, 2019, ໜ້າ 34), ນັ້ນແມ່ນ ເສັ້ນທາງການປະຕິວັດຊາດ ປະຊາທິປະໄຕ ປະຊາຊົນ ໂດຍແມ່ນພັກ ກອມມູນິດ ແນໃສ່ໂຄ່ນລົ້ມຈັກກະພັດ ແລະ ສັກດິນາລຸກແຫ້ງຕົນມີ, ຍາດເອົາເອກະລາດແຫ່ງຊາດ, ປະຕິບັດການມອບດິນນາໃຫ້ຊາວນາ ເຮັດ ຫຼັງຈາກນັ້ນ ກໍ່ກ້າວຂຶ້ນດຳເນີນການປະຕິວັດສັງຄົມນິຍົມ ແລະ ປະຕິບັດລັດທິສັງຄົມນິຍົມ ແລະ ລັດທິກອມມູນິດ ຢູ່ຫວຽດນາມ. ນັ້ນແມ່ນເສັ້ນທາງຍົກສູງຄົນທຸງເອກະ ລາດແຫ່ງຊາດ ແລະ ລັດທິ ສັງຄົມນິຍົມ, ສົມທົບແໜ້ນນ້ຳໃຈຮັກຊາດອັນແທ້ຈິງ ກັບລັດທິ ສາກົນ ຂອງຊົນຊັ້ນກຳມະກອນ, ສົມທົບແໜ້ນກຳລັງແຮງຂອງຊາດ ກັບກຳລັງແຮງຍຸກສະໄໝ ແນໃສ່ປະຕິບັດຈຸດໝາຍປົດປ່ອຍຊາດ, ປົດ ປ່ອຍສັງຄົມ ແລະ ປົດປ່ອຍມວນມະນຸດ.

ຈາກການໝູນໃຊ້ບັນດາທັດສະນະ ກ່ຽວກັບນ້ຳໃຈສາກົນກຳ ມາຊີບ ຂອງລັດທິມາກ - ເລນິນ ຢ່າງປະດິດສ້າງ ຂອງປະທານ ໂຮ່ຈີ ມິນ ໃນເງື່ອນໄຂ ແລະ ສະພາບຄວາມເປັນຈິງ ຂອງຂະບວນການ ປະຕິວັດປົດປ່ອຍຊາດ ຢູ່ຫວຽດນາມ ກໍ່ຄືຢູ່ໃນອິນດູ ຈີນ ໄດ້ເຮັດ ໃຫ້ທັດສະນະດັ່ງກ່າວ ມີການເພີ່ມເຕີມເສີມຂະຫຍາຍໃຫ້ມີຄວາມ ອຸດົມ ສົມບູນຍິ່ງຂຶ້ນ ແລະ ໄດ້ສົ່ງຜົນສະທ້ອນຢ່າງເລິກເຊິ່ງ, ກວ້າງຂວາງ ຕໍ່ກັບຂະບວນການຕໍ່ສູ້ປົດປ່ອຍຊາດຢູ່ປະເທດເຮົາ ແລະ ກາຍມາເປັນແນວທາງ ຂອງຄວາມສາມັກຄີເປັນປຶກແຜ່ນພາຍ ໃນຊາດ ບົນພື້ນຖານພັນທະພາບກຳມະກອນ, ຊາວຜູ້ອອກແຮງງານ ເປັນກົກ ແລະ ສາມັກຄີ ລະຫວ່າງຊາດ ກັບສາກົນອັນຜ່ອງໃສ, ປະກອບສ່ວນເຮັດໃຫ້ການຕໍ່ສູ້ປົດປ່ອຍຊາດ ຂອງປະຊາຊົນເຮົາ ກາຍເປັນພາກສ່ວນໜຶ່ງຂອງການປະຕິວັດອິນດູ ຈີນ ແລະ ການ ປະຕິວັດໂລກນຳອີກ. ປະທານ ໄກສອນ ພົມວິຫານ ຜູ້ນຳພາກໍ່ຕັ້ງ ພັກປະຊາຊົນປະຕິວັດລາວ ໄດ້ຢືນຢັນວ່າ: “ແນວທາງການເມືອງ ຂອງພັກເຮົາ ແມ່ນຜະລິດ ຕະພັນຂອງການໝູນໃຊ້ລັດທິມາກ - ເລ ນິນ ເຂົ້າໃນສະພາບຄວາມເປັນຈິງຂອງລາວ” (ນາວຕົວຢ່າງ, 2008, ໜ້າ 378).

2. ສະພາບແວດລ້ອມທາງດ້ານພຶດຕິກຳ ພາໃຫ້ກຳເນີດແນວ ຄິດ ໄກສອນ ພົມວິຫານ ກ່ຽວກັບການສົມທົບແໜ້ນ ນ້ຳໃຈຮັກ ຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມະຊີບອັນແທ້ຈິງ ໃນການກ້າວ ຂຶ້ນສັງຄົມນິຍົມ.

ພາຍຫຼັງສົງຄາມໂລກ ຄັ້ງທີ 2 ສິ້ນສຸດລົງ, ສະພາບການເມືອງ ໂລກ ໄດ້ມີການຜັນແປຢ່າງໃຫຍ່ຫຼວງ ແລະ ເລິກເຊິ່ງທີ່ສຸດ, ໂລກ ໄດ້ແບ່ງອອກເປັນສອງຂໍ້ວອຳນາດ ຄື: ທຶນນິຍົມ ແລະ ສັງຄົມນິຍົມ ເຊິ່ງໄດ້ສົ່ງຜົນສະທ້ອນໃຫ້ຂະບວນການປະຕິວັດ, ການຕໍ່ສູ້ປົດປ່ອຍ ຊາດໃນທົ່ວໂລກ ມີການຂະຫຍາຍຕົວຢ່າງຟົດເຟື້ອດ, ຕໍ່ເນື່ອງ ແລະ ນັບມື້ຍິ່ງແຂງແຮງຂຶ້ນ.

ໄຊຊະນະ ຂອງມະຫາປະຕິວັດເດືອນຕຸລາ ຣັດເຊຍ ປີ 1917 ພາຍໃຕ້ການນຳພາທີ່ປີຊາສາມາດຂອງ ວ.ອີ. ເລນິນ ແລະ ພັກໂບນເຊວິກ, ຊົນຊັ້ນກຳມະກອນ ແລະ ປະຊາ ຊົນຊາວຜູ້ ອອກແຮງງານຣັດເຊຍ ທີ່ໄດ້ໂຄ່ນລົ້ມລະບອບພະເຈົ້າຊາ ແລະ ສ້າງ ລັດກຳມະກອນ - ຊາວນາທຳອິດຂຶ້ນໃນໂລກ, ໄດ້ເປີດສາກໃຫ້ຍຸກ ສະໄໝໃໝ່ໃນປະຫວັດ ສາດ ຂອງມວນມະນຸດ, ເປັນຂີດໝາຍ ແຫ່ງຍຸກສະໄໝປັດຈຸບັນ ເຊິ່ງເປັນຍຸກສະໄໝຂ້າມຜ່ານຈາກລັດທິ ທຶນນິຍົມ ຂຶ້ນສູ່ສັງຄົມນິຍົມ. ໄຊຊະນະອັນຍິ່ງໃຫຍ່ນີ້ ບໍ່ພຽງແຕ່ໄດ້ ສ້າງຄວາມສັ່ນສະເທືອນໄປທົ່ວໂລກໃນເວລານັ້ນ ຫາກຍັງສົ່ງຜົນ ກະທົບ, ຜົນສະ ທ້ອນຢ່າງເລິກເຊິ່ງເຖິງການຂະຫຍາຍຕົວ ຂອງ ຂະບວນການຕໍ່ສູ້ປະຕິວັດປົດປ່ອຍຊາດ ຢູ່ອິນດູຈີນ ເວົ້າລວມ, ເວົ້າ ສະເພາະແມ່ນ ການປະຕິວັດລາວເຮົາ.

ໃນເວລາຄົ້ນຄວ້າ ກ່ຽວກັບການປະຕິວັດເດືອນຕຸລາ ຣັດເຊຍ ປີ 1917, ໂຮ່ຈີມິນ ໄດ້ຊອກເຫັນໃນການປະຕິວັດທີ່ຍິ່ງໃຫຍ່ນີ້ ກ່ຽວ ກັບຕົວແບບຂອງເສັ້ນທາງປົດປ່ອຍ ແລະ ພັດທະນາຂອງຊາດ ຫວຽດນາມ. ເພີ່ນຂຽນວ່າ: “ໃນໂລກປັດຈຸບັນ ມີແຕ່ການ ປະຕິວັດຣັດເຊຍເທົ່ານັ້ນ ທີ່ໄດ້ຮັບຜົນສຳເລັດ ແລະ ສຳເລັດຢ່າງສຸດ ກົກສຸດຍາຍ, ໝາຍຄວາມວ່າ ປະຊາຊົນໄດ້ຮັບຄວາມຜາສຸກ, ອິດສະຫຼະພາບ ແລະ ສະເໝີພາບຢ່າງແທ້ຈິງ, ບໍ່ແມ່ນອິດສະຫຼະພາບ ແລະ ສະເໝີພາບແບບຈອມປອມ ຄືກັບທີ່ຈັກກະ ພັດຝຣັ່ງ ເຄີຍໄດ້ ອວດອ້າງ ຢູ່ອານນາມ. ການປະຕິວັດຣັດເຊຍ ໄດ້ຂັບໄລ່ເຈົ້າຊີວິດ, ນາຍທຶນ, ເຈົ້າທີ່ດິນແລ້ວ ຍັງອອກແຮງຊ່ວຍເຫຼືອໃຫ້ກຳມະກອນ, ຊາວນາບັນດາປະເທດ ແລະ ປະຊາຊົນທີ່ຖືກກົດຂີ່ຢູ່ບັນດາຫົວເມືອງ ຂຶ້ນ ເຮັດການປະຕິວັດ ເພື່ອໂຄ່ນລົ້ມທັງໝົດຈັກກະພັດນິຍົມ ແລະ ນາຍທຶນໃນໂລກ. ການປະຕິວັດຣັດເຊຍ ໄດ້ສອນໃຫ້ພວກເຮົາຮູ້ວ່າ ຢາກເຮັດການປະຕິວັດໃຫ້ສຳເລັດ ຕ້ອງເອົາມະຫາຊົນ (ກຳມະກອນ - ຊາວນາ) ເປັນກົກ, ຕ້ອງມີພັກທີ່ໝັ້ນຄົງ, ຕ້ອງກ້າຫານ, ຕ້ອງຍອມ ເສຍສະຫຼະ, ຕ້ອງເປັນເອກະພາບ. ເວົ້າລວມແລ້ວ ຕ້ອງເດີນຕາມ ລັດທິມາກ - ເລນິນ” (ໂຮ່ຈີມິນ, 2018, ໜ້າ 368). ໂດຍ ຕະຫຼອດການນຳພາ, ຊີ້ນຳຂອງພັກປະຊາຊົນປະຕິວັດລາວ, ປະທານ ໄກສອນ ພົມວິຫານ ກໍ່ໄດ້ຢືນຢັນວ່າ: “ຍາມໃດ ແລະ ເວລາໃດ ບັນດາຫຼັກມູນເຄົ້າເຫງົ້າຕໍ ຂອງລັດທິມາກ - ເລນິນ ກໍ່ຕ້ອງໝູນຫົວ ແລະ ເປັນແສງສະຫວ່າງເຍືອງທາງໃຫ້ທຸກໆ ບາດ ກ້າວເດີນຂອງພັກ ແລະ ຂອງຊາດເຮົາຕະຫຼອດໄປ” (ນາວຕົວຢ່າງ, 2008, ໜ້າ 378).

ພາຍຫຼັງທີ່ປະທານ ໂຮ່ຈີມິນ ສາມາດຊອກໄດ້ເສັ້ນທາງກອບກູ້ ຊາດອັນຖືກຕ້ອງໃຫ້ແກ່ການປະຕິວັດຫວຽດນາມ ກໍ່ຄືການປະຕິວັດ ຂອງສາມຊາດອິນດູຈີນ, ນັ້ນແມ່ນເສັ້ນທາງປະຕິວັດກຳມາຊີບ ຂອງ ລັດທິມາກ - ເລນິນ, ເພີ່ນໄດ້ເຮັດທຸກສິ່ງຢ່າງ ເພື່ອໂຄ ສະນາເຜີຍແຜ່ ອຸດົມການປະຕິວັດເດືອນຕຸລາ ຣັດເຊຍ, ລັດທິມາກ - ເລນິນ ແລະ ໄດ້ຕັ້ງໜ້າກະກຽມ ທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ເພື່ອ ສ້າງຕັ້ງພັກການ ເມືອງກຳມາຊີບ ຢູ່ອິນດູຈີນ ນັ້ນແມ່ນພັກກອມມູນິດ ອິນດູຈີນ (ສ້າງຕັ້ງຂຶ້ນໃນວັນທີ 3/2/1930). ນັບແຕ່ມື້ໄດ້ຮັບການ ສ້າງຕັ້ງຂຶ້ນ, ພັກກອມມູນິດອິນດູຈີນ ໄດ້ມີໂຄງການການເມືອງທີ່ ຖືກຕ້ອງ, ກຳນົດບັນດາບັນຫາພື້ນຖານທາງດ້ານຍຸດທະສາດ ຂອງການ ປະຕິວັດອິນດູຈີນ, ສະແດງໃຫ້ເຫັນເຖິງການສົມທົບແໜ້ນ ລະຫວ່າງ ຄວາມເປັນເອກະລາດ ແລະ ສັງຄົມນິຍົມ, ສິ້ນສຸດໄລຍະວິກິດ ແລະ ຈົນຕາແຈ ກ່ຽວກັບເສັ້ນທາງກອບກູ້ຊາດ, ເປີດສາກຍຸກສະໄໝໃໝ່

ໃຫ້ແກ່ການປະຕິວັດ ຢູ່ອິນດູຈີນ.

ຍ້ອນສະພາບວິກິດການທາງດ້ານເສດຖະກິດທີ່ໜັກໜ່ວງ ຂອງລັດທິທຶນນິຍົມ ໄດ້ແຜ່ຂະຫຍາຍໄປໃນທົ່ວໂລກ, ນັບທັງໃນ ພາກພື້ນສາມປະເທດອິນດູຈີນ ເຊິ່ງເຮັດໃຫ້ລັດຖະບານອິນດູຈີນທີ່ ຄອບງຳໂດຍພວກນາຍທຶນຜູກຂາດ ປະກາດໃຊ້ບັນດາມາດຕະການ ເສດຖະກິດ - ການເມືອງ ເພື່ອແນໃສ່ເພີ່ມທະວີການກົດຂີ່, ຂູດຮີດ ຊັບສິນຂອງປະຊາຊົນ ໃນສາມຊາດອິນດູຈີນ ເພື່ອໄປຄ້ຳຈູນໃຫ້ແກ່ ຜົນກະທົບຈາກວິກິດເສດຖະ ກິດ. ໃນເດືອນ 10 ປີ 1930, ພັກ ກອມມູນິດອິນດູຈີນ ໂດຍມີປະທານ ໂຮ່ຈີມິນ ເປັນຜູ້ນຳ ໄດ້ອີງໃສ່ ສະພາບຄວາມເປັນຈິງ ຂອງກຳລັງສັດຕູ ແລະ ຂໍ້ຂັດແຍ່ງໃນສັງຄົມ ອິນດູຈີນ ເວລານັ້ນ, ເພິ່ນໄດ້ຊີ້ແຈງວ່າ: ຊົນຊັ້ນກຳມະກອນ ແລະ ປະຊາຊົນຊາວຜູ້ອອກ ແຮງງານທີ່ຖືກກົດຂີ່ ຢູ່ສາມປະເທດ: ລາວ, ຫວຽດນາມ ແລະ ກຳປູເຈຍ ຢາກໂຄ່ນລົ້ມຈັກກະພັດ ເຟື່ອຍາດເອົາ ເອກະລາດ ແລະ ໂຄ່ນລົ້ມສັກດິນາ, ນາຍທຶນ ເພື່ອປົດປ່ອຍຕົນເອງ ນັ້ນ ບໍ່ອາດຈະຕໍ່ສູ້ເອົາໃຜເອົາມັນ ແລະ ບໍ່ອາດຈະໄດ້ຮັບການປົດ ປ່ອຍໂດຍການຕໍ່ສູ້ຢູ່ໃນສະເພາະຊາດໃຜມັນໄດ້ ເພາະວ່າສາມ ປະເທດ: ລາວ, ຫວຽດນາມ ແລະ ກຳປູ ເຈຍ ລ້ວນແຕ່ມີສັດຕູໂຕ ດຽວກັນ ຄື: ຕົກເປັນຫົວເມືອງຂຶ້ນ ຂອງຈັກກະພັດຝຣັ່ງ. ຈາກທິດ ຊີ້ນຳດັ່ງກ່າວ, ກອງທະຫານອາສາສະໝັກຫວຽດນາມ ໄດ້ຖືກສົ່ງເຂົ້າ ມາ ເຄື່ອນໄຫວຊ່ວຍເຫຼືອ ແລະ ສະໜັບສະໜູນປະເທດເຮົາ ເພື່ອ ຕໍ່ສູ້ປົດປ່ອຍຊາດປະຊາ ທິປະໄຕຢ່າງຕັ້ງໜ້າ ແລະ ພິລະອາດຫານ ຈົນສາມາດຍາດໄດ້ໄຊຊະນະນີ້ ໄປສູ່ໄຊຊະນະ ໃໝ່ທີ່ໃຫຍ່ຫຼວງ ເລື້ອຍມາ.

ສາມາດເວົ້າໄດ້ວ່າ ບໍ່ວ່າຈະຢູ່ໃນບັນດາບັ້ນຮົບທີ່ດຸເດືອດທີ່ ສຸດ, ໜ້າທີ່ປະຕິວັດທີ່ສຳຄັນທີ່ສຸດ ໃນພາລະກິດການຕໍ່ສູ້ປົດປ່ອຍ ຊາດລາວ ແມ່ນລ້ວນແຕ່ມີຮ່ອງຮອຍຂອງທະຫານອາສາສະໝັກ ຫວຽດນາມ ທີ່ເວລາໃດກໍ່ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ. ດັ່ງທີ່ປະທານ ໄກສອນ ພົມວິຫານ ໄດ້ຢືນຢັນວ່າ: “ເຂົາເຈົ້າໄດ້ຍົກ ສູງຈິດໃຈສາກົນກຳມາຊີບທີ່ໃສແຈ້ງ, ຮັກແພງປະຊາຊົນລາວ ຄືກັບ ພໍ່ແມ່, ອ້າຍນ້ອງຮ່ວມສາຍ ເລືອດຂອງຕົນ, ເຂົ້າເມັດຫັກ, ຜັກເສັ້ນ ແບ່ງ, ຮັບເອົາຄວາມຫຍຸ້ງຍາກມາໃຫ້ຕົນເອງ, ມອບຄວາມສະດວກ ສະບາຍໃຫ້ແກ່ເພື່ອນ, ຄຽງບ່າຄຽງໄຫຼ່ສູ້ຮົບ, ເປັນຕາຍຮ່ວມກັນ..., ດ້ວຍຈິດໃຈພິລະອາດຫານອັນຍອດຍິ່ງ ໃນທຸກສະໜາມຮົບຂອງ ປະເທດ ທີ່ຮັກແພງ ຂອງພວກຂ້າພະເຈົ້າ ລ້ວນແຕ່ມີການ ເສຍສະຫຼະເລືອດເນື້ອ ຂອງເຫຼົ່ານັກຮົບສາກົນຫວຽດນາມ ປົ່ນເຈືອ ຮ່ວມກັບເລືອດເນື້ອ ຂອງບັນດາພະນັກງານ ແລະ ນັກຮົບປະຊາຊົນ ລາວ ພວກຂ້າພະເຈົ້າ” (People’s Army Newspaper, 2023).

ບົນພື້ນຖານນ້ຳໃຈຮັກຊາດອັນດູດດື່ມ ຂອງປະທານ ໄກສອນ ພົມວິຫານ ທີ່ມີຕໍ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າ ບວກກັບ ການໄດ້ຮັບຜົນສະທ້ອນຈາກຂະ ບວນການປະຕິວັດໂລກ, ໂດຍ ສະເພາະແມ່ນ ການປະຕິວັດເດືອນຕຸລາ ຣັດເຊຍ ແລະ ການປະຕິວັດ ໃນສາມປະເທດອິນດູຈີນ, ພິເສດແມ່ນແນວໂຮມຫວຽດມິງ ເຊິ່ງແມ່ນ ປະທານ ໂຮ່ຈີມິນ ເປັນຜູ້ກໍ່ຕັ້ງ ແລະ ນຳພາໃນພຶດຕິກຳ ຂະບວນການ ຕໍ່ສູ້ປົດປ່ອຍຊາດ ປະຊາທິປະໄຕປະຊາຊົນ ຢູ່ຫວຽດນາມ ໄດ້ ກາຍເປັນພື້ນຖານແຫ່ງການກຳເນີດເປັນທັດ ສະນະ, ແນວຄິດຂອງ ປະທານ ໄກສອນ ພົມວິຫານ ກ່ຽວກັບການສົມທົບແໜ້ນນ້ຳໃຈຮັກ ຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊີບອັນແທ້ຈິງ ໃນການກ້າວ ຂຶ້ນສັງຄົມນິຍົມ ຢູ່ປະເທດເຮົາ. ກະໂຕປະທານ ໄກສອນ ພົມວິຫານ ກໍ່ເຄີຍມີຄວາມເຫັນວ່າ: “ການເຄື່ອນໄຫວຂອງຫວຽດມິງ ໄດ້ເຮັດໃຫ້ ເພີ່ນເກີດມີແນວຄິດຮັກຊາດ ແລະ ຢາກໃຫ້ປະເທດຊາດເປັນ ເອກະລາດ...”(ຫໍພິພິດຕະພັນ ໄກສອນ ພົມວິຫານ, 2020). ເພາະ ການເຄື່ອນໄຫວດັ່ງກ່າວ ແມ່ນຂະບວນການຕໍ່ສູ້ຂອງປະຊາຊົນ ຫວຽດນາມ ຜູ້ຮັກຊາດ, ເວລາໃດກໍ່ແນໃສ່ນຳພາປະເທດຊາດຫຼຸດພົ້ນ ອອກຈາກແອກການກົດຂີ່ຂູດຮີດ ຂອງສັດຕູຕ່າງດ້າວຜູ້ຮຸກຮານ.

II. ເນື້ອໃນແນວຄິດ ໄກສອນ ພົມວິຫານ ກ່ຽວກັບການ ສົມທົບແໜ້ນນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊີບ ອັນແທ້ຈິງ ໃນການກ້າວຂຶ້ນສັງຄົມນິຍົມ ຢູ່ປະເທດເຮົາ.

1. ແນວຄິດ ໄກສອນ ພົມວິຫານ ກ່ຽວກັບນ້ຳໃຈຮັກຊາດອັນ ດູດດື່ມ.

ປະທານ ໄກສອນ ພົມວິຫານ ໄດ້ສັ່ງສອນ ແລະ ຢ້ຳເຕືອນສະເ ໝີວ່າ: ການກ້າວຂຶ້ນສັງຄົມນິຍົມ ແມ່ນຂະບວນວິວັດແຫ່ງການຕໍ່ສູ້ ຢ່າງລຳບາກ, ຍາວນານ ແລະ ຕ້ອງອີງໃສ່ຈິດໃຈເພິ່ງຕົນເອງ, ກຸ້ມຕົນ ເອງເປັນຕົ້ນຕໍ. ຈາກນັ້ນ, ເພິ່ນຈຶ່ງຖືສຳຄັນບັນຫາການສ້າງ, ເຕົ້າໂຮມ ແລະ ເສີມຂະຫຍາຍນ້ຳໃຈຮັກຊາດອັນດູດດື່ມຂອງປະ ຊາຊົນລາວ ບັນດາເຜົ່າ ແນໃສ່ເຕົ້າໂຮມກ້ອນກຳລັງມະຫາສາມັກຄີທົ່ວປວງຊົນສູ້ ຮົບ ແລະ ປົກປັກຮັກສາປະເທດຊາດ ໂດຍໄດ້ເນັ້ນວ່າ: “ຄວາມຮັກ ຊາດໃນສູ່ມື້ນີ້ ຕ້ອງສະແດງອອກເປັນຈິງເຖິງຈິດໃຈເປັນເຈົ້າປະເທດ ຊາດ, ເປັນເຈົ້າສັງຄົມ, ຍາມໃດກໍ່ເສີມຂະຫຍາຍລັດທິວິລະຊົນ ປະຕິວັດ, ພ້ອມແລ້ວສູ້ທົນຕໍ່ຄວາມຫຍຸ້ງຍາກຂາດເຂີນ, ... ຮັກຊາດ ແມ່ນຕ້ອງອອກແຮງປົກປັກຮັກສາ ແລະ ກໍ່ສ້າງລະບອບໃໝ່ - ລະບອບສັງຄົມນິຍົມ”(ພົມວິຫານ, 1977, ໜ້າ 40-41).

ເມື່ອເວົ້າເຖິງນ້ຳໃຈຮັກຊາດອັນດູດດື່ມ, ປະທານ ໄກສອນ

ພົມວິຫານ ເຄີຍໄດ້ກ່າວວ່າ: “ໃນປະຫວັດສາດ, ມີຫຼາຍໄລຍະທີ່ ປະເທດຊາດຂອງພວກເຮົາ ໄດ້ຕົກຢູ່ໃນສະພາບບ້ານແຕກແຊກຊາດ , ເສດຖະກິດຖືກຊຸດໂຊມ, ປະຊາຊົນເຮົາຕ້ອງຍົກຍ້າຍເລື້ອຍໆ ຍ້ອນສັດຕູມາຮຸກຮານ. ແຕ່ວ່າເຜົ່າຕ່າງໆ ຂອງປະເທດເຮົາ ກໍ່ຍັງຄົງ ອົງອາດກ້າແກ່ນ, ເດັດຂາດບໍ່ອ່ອນຍອມສັດຕູ, ຍັງຄົງມີຄວາມສຸກ ຂະທັດ, ຮັກຫອມຊື່ວິດ ແລະ ເຊື່ອໝັ້ນໃນອະນາຄົດຂອງຊາດຕົນຢູ່ ສະເໝີ”[5,44]. ປະທານ ໄກສອນ ຍັງໄດ້ເນັ້ນໜັກຕື່ມວ່າ: “ຊາດ ຂອງເຮົາໄດ້ມີມູນເຊື້ອຕ້ານສິ່ງຄາມຮຸກຮານ ບໍ່ໄດ້ເຄີຍກໍ່ສິ່ງ ຄາມກັບ ປະເທດໃດໆເລີຍ, ມີແຕ່ປາຖະໜາຢາກດຳລົງຊີວິດໃນສັນຕິພາບ, ຢູ່ເຢັນເປັນສຸກເທົ່ານັ້ນ” (ພົມວິຫານ, 1977, ໜ້າ 44).

ຕໍ່ກັບທັດສະນະຂອງປະທານ ໄກສອນ ພົມວິຫານ ກ່ຽວ ກັບນ້ຳໃຈຮັກຊາດອັນດູດດື່ມນັ້ນ, ເພີ່ນຍັງໄດ້ເນັ້ນໜັກຢູ່ໃນການ ສະຫຼຸບບາງຈຸດເດັ່ນ ກ່ຽວກັບວິຖະນະຍາດແຫ່ງຊາດລາວ ຄື “ເດັດຂາດບໍ່ອ່ອນຍອມຕໍ່ສັດຕູ, ປາຖະໜາອັນແຮງກ້າໃນສັນຕິພາບ, ຮັກແພງຊື່ສັດຕໍ່ເພື່ອນມິດ, ປອງດອງກັນພາຍໃນຊາດ ແລະ ຍາມ ໃດກໍ່ເບີກບານສົດ ຊື່ນຮັກຊີວິດ, ຮັກສິລະປະ, ຂະຫຍັນພາກພຽນ ໃນການອອກແຮງງານ, ດຳລົງຊີວິດຢ່າງກະທັດຮັດງ່າຍດາຍ” (ພົມວິຫານ, 1977, ໜ້າ 46).

ເພື່ອແນໃສ່ການຕອບຕ້ານອຸບາຍ, ລາຍລ່ຽມອັນເລິກແລບ, ໂຫດຫ້ຽມ ຂອງພວກຈັກກະພັດນິຍົມ, ອິດທິກຳລັງປ່ລະປັກສັດຕູ ທີ່ເວລາໃດກໍ່ບໍ່ລົດລະອຸບາຍຫວັງບັ່ນທອນນ້ຳໃຈຮັກຊາດ, ກຳລັງ ແຮງປະຕິວັດຂອງປະຊາຊົນບັນດາເຜົ່າ ໃນການຕໍ່ສູ້ກູ້ຊາດ, ຍາດເອົາ ຄວາມເປັນເອກະລາດ, ປະທານ ໄກສອນ ພົມວິຫານ ໄດ້ກ່າວເຕືອນ ພວກເຮົາດ້ວຍການເນັ້ນໜັກເຖິງຄຳເວົ້າຂອງທ່ານ ໄຟດາງ ລໍເຢຍ ຢາວ ທີ່ໄດ້ກ່າວວ່າ: ສັດຕູແກ່ດຶງເຜົ່າມົ້ງ ຂອງພວກເຮົານັ້ນ ບໍ່ແມ່ນ ວ່າພວກເຂົາຮັກຫອມຊາວມົ້ງດອກ, ຈຸດປະສົງຂອງພວກເຂົາ ແມ່ນ ເພື່ອແບ່ງແຍກ ແລະ ດັບສູນເຜົ່າມົ້ງນັ້ນເອງ. ຈາກຄຳເວົ້າດັ່ງກ່າວ ຂອງທ່ານ ໄຟດາງ ລໍເຢຍຢາວ ໄດ້ເຮັດໃຫ້ປະທານ ໄກສອນ ພົມວິຫານ ຮັບຮູ້ ແລະ ເຫັນໄດ້ວ່າທ່ານ ໄຟດາງ ລໍເຢຍຢາວ ໄດ້ມີ ສາຍຕາເບິ່ງກວ້າງມອງໄກທີ່ສຸດ ຕໍ່ກັບອຸບາຍທຳລາຍມ້າງເພ ກ້ອນ ກຳລັງມະຫາສາມັກຄີແຫ່ງຊາດ ຂອງທົ່ວປວງຊົນລາວບັນ ດາເຜົ່າ ເຮົາ. ຈາກນັ້ນ, ປະທານ ໄກສອນ ພົມວິຫານ ຈຶ່ງໄດ້ໃຫ້ຄຳບອກ ເຕືອນຕໍ່ກັບບັນດາພະນັກງານ, ສະມາຊິກພັກທັງໝົດໃຫ້ມີສະຕິ ແລະ ເອົາໃຈໃສ່ກ່ຽວກັບສິ່ງທີ່ສັດຕູພວມແນໃສ່ມ້າງຄວາມສາມັກຄີ ເປັນເອກະພາບ ກໍ່ຄືນ້ຳໃຈຮັກຊາດອັນດູດດື່ມຂອງປະຊາຊົນລາວ ບັນດາເຜົ່າ ຄື: “... ການເຮັດໃຫ້ບັນດາເຜົ່າປອງດອງກັນຢ່າງແທ້ຈິງ ໃນວິຖະນະຍາດແຫ່ງຊາດລາວ, ເຮັດໃຫ້ບັນດາເຜົ່າສາມັກຄີກັນ ເພື່ອພ້ອມກັນກ້າວຂຶ້ນສັງຄົມນິຍົມ ແລະ ກອມມູນິດນິຍົມ, ຕ້ານ ອຸບາຍ ແລະ ເລ່ລ່ຽມຂອງພວກຂະ ຫຍາຍອານາເຂດປັກກິ່ງ, ພວກ ຈັກກະພັດນິຍົມ ແລະ ພວກປະຕິການອື່ນໆ ທີ່ແບ່ງແຍກຊາດຂອງ ພວກເຮົານັ້ນ ກໍ່ພໍຊີ້ໃຫ້ເຫັນແຈ້ງແລ້ວວ່າ ບັນຫາເຜົ່າຕ່າງໆ ຢູ່ໃນປະ ເທດຂອງພວກເຮົາ ເປັນບັນຫາຍາວນານ, ມີຄວາມສຳຄັນທີ່ສຸດ, ມັນ ສອດຫ້ອຍເຂົ້າໃນທຸກຂົງເຂດວຽກງານ ຂອງການປະຕິວັດ ແລະ ມີ ຄວາມໝາຍຕັດສິນການສຳເລັດຜົນ ຫຼື ການປະລາໄຊ ຂອງພາລະກິດ ຂອງພວກເຮົາ”(ພົມວິຫານ, 1982, ໜ້າ 61-62).

2. ແນວຄິດ ໄກສອນ ພົມວິຫານ ກ່ຽວກັບນ້ຳໃຈສາກົນກຳມາ ຊີບອັນແທ້ຈິງ.

ບົນພື້ນຖານການໝູນໃຊ້ທິດສະດີປະຕິວັດຂອງລັດທິມາກ - ເລນິນ, ແນວຄິດ ໂຮ່ຈິມິນ ເຂົ້າໃນເງື່ອນໄຂ, ສະພາບແວດລ້ອມການ ປະຕິວັດປະເທດເຮົາ, ປະທານ ໄກສອນ ພົມວິຫານ ໄດ້ໃຫ້ຄວາມສຳ ຄັນຕໍ່ການສົມທົບແໜ້ນ ລະຫວ່າງທິດສະດີການປະຕິວັດສັງຄົມນິຍົມ ກັບການປະຕິວັດຊາດປະຊາທິປະໄຕ, ຢຶດໝັ້ນໃນອຸດົມການສັງ ຄົມ ນິຍົມ. ເພື່ອຢາກສ້າງໄດ້ຖັນແຖວພະນັກງານ, ນັກຮົບ, ສະມາຊິກພັກ ທີ່ມີທາດແທ້ປະຕິວັດ, ຫຼັກໝັ້ນຊົນຊັ້ນກ້າແກ່ນ, ເພີ່ນໄດ້ເນັ້ນໜັກວ່າ: “ການສຶກສາອົບຮົມລັດທິມາກ - ເລນິນ, ທັດສະນະຫຼັກໝັ້ນຊົນຊັ້ນ ກຳມະກອນ ແລະ ຊີວະທັດກອມມູນິດ ໃຫ້ພະນັກງານ, ສະມາຊິກ ພັກ ຍິ່ງມີຄວາມສຳຄັນທີ່ສຸດ” (ພົມວິຫານ, 1979, ໜ້າ 161).

ຈາກຄວາມຮັບຮູ້ທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງ ຂອງ ການເຄື່ອນໄຫວຕໍ່ສູ້ປະຕິວັດລາວ ຂອງ ປະທານ ໄກສອນ ພົມວິຫານ, ໂດຍສະເພາະແມ່ນໃນໄລຍະແຫ່ງການກໍ່ສ້າງ ແລະ ຂະຫຍາຍຕົວຂອງ ສັງຄົມນິຍົມ ຂອງບັນດາປະຊາຊາດໃນໂລກ ກໍ່ຄືໃນພາກພື້ນອິນດູຈີນ ເພື່ອເລືອກເສັ້ນທາງເດີນຂອງຕົນເອງ ຕາມເສັ້ນທາງສັງຄົມນິຍົມເພີ່ນ ໄດ້ນຳພາຂະບວນການຕໍ່ສູ້ພາຍໃນປະເທດ ແລະ ສົມທົບແໜ້ນກັບ ຂະບວນການຕໍ່ສູ້ ຢູ່ພາກພື້ນອິນດູຈີນ ຈົນສາມາດສ້າງຕັ້ງພັກ ປະຊາຊົນປະຕິວັດລາວ ຂຶ້ນໃນຕົ້ນປີ 1955 ແລະ ໄດ້ມີການຮ່ວມມື ຢ່າງກວ້ງຂວາງ ກັບບັນດາປະເທດສັງຄົມນິຍົມອ້າຍນ້ອງໃນໂລກ. ປະທານ ໄກສອນ ພົມວິຫານ ໄດ້ກ່າວວ່າ: “ຕໍ່ກັບປະເທດໃກ້ຄຽງ, ຊາດຂອງພວກເຮົາ ຍາມໃດກໍ່ຮັກສາສາຍສຳພັນມິດຕະພາບອັນດີຕໍ່ ກັນ, ດຳລົງຄົງຢູ່ໃນຄວາມເປັນມິດນຳກັນ, ພິເສດແມ່ນນັບແຕ່ມີການ ປະຕິວັດມາຮອດປັດຈຸບັນນີ້, ຊາດຂອງພວກເຮົາ ໄດ້ມີການພົວພັນ ກັບປະເທດຕ່າງໆ ບົນຈິດໃຈສາກົນກຳມາຊີບອັນຜ່ອງໃສ ແລະ ນະໂຍບາຍສັນຕິພາບ, ມິດຕະພາບ ແລະ ການຮ່ວມມື, ຕ່າງຝ່າຍຕ່າງ ໄດ້ຮັບຜົນ” (ພົມວິຫານ, 1982). ພ້ອມກັນນັ້ນ, ປະທານ ໄກສອນ ພົມວິຫານ ພ້ອມກັບສູນກາງພັກ ກໍ່ໄດ້ຍົກທັດສະນະຊີ້ນຳຂະບວນ

ການປະຕິວັດທີ່ເຕົ້າໂຮມ ຢູ່ແຂວງຜົ້ງສາລີ ແລະ ແຂວງຫົວພັນ ຕື່ມ ວ່າ: “ຢູ່ໃນພາລະກິດສາກົນອັນຜ່ອງໃສຂອງຕົນ - ໄດ້ຕັ້ງໝັ້ນໃນ ແຜນນະໂຍບາຍອີງໃສ່ກຳລັງຕົນເອງເປັນຕົ້ນຕໍ - ເຊີດຊູສະຕິເພິ່ງຕົນ ເອງ - ເສີມຂະຫຍາຍຄວາມບາກ ບັ່ນອັດຕະວິໄສຂອງຕົນຢ່າງສຸດ ຂີດ ເປັນພື້ນຖານໃຫ້ແກ່ການສ້າງຄວາມສາມັກຄີຮ່ວມສຳພັນສູ້ຮົບ ສາກົນອິນດູຈີນ ແລະ ໃນໂລກ” (ນາວຕົວຢ່າງ, 2008). ເຊິ່ງໄດ້ ກາຍເປັນທັດສະນະຊີ້ນຳລວມ ຂອງຂະບວນການປະຕິວັດ ທີ່ມີ ລັກສະນະສາກົນອັນຜ່ອນໃສ ໄດ້ສະແດງເຖິງການສືບຕໍ່ປະຕິບັດ ໜ້າທີ່ສາກົນກຳມາຊີບ ແຫ່ງການເພີ່ມທະວີຮ່ວມສຳພັນສູ້ຮົບພິເສດ, ຮອບດ້ານ ລະຫວ່າງ 3 ພັກ, 3 ອົງການຈັດຕັ້ງປະຕິວັດ ແລະ ປະຊາຊົນ 3 ປະ ເທດຢ່າງແໜ້ນແຟ້ນນຳກັນ, ສາມັກຄີບັນດາ ປະເທດສັງຄົມນິຍົມ ແລະ ເພື່ອນມິດຜູ້ຮັກຫອມສັນຕິພາບໃນທົ່ວ ໂລກ ກາຍເປັນກຳລັງແຮງສັງລວມທີ່ຊະນະເລີດ, ສາມາດຕີຕ້ານເອົາ ຊະນະຈັກກະພັດຮຸກຮານ ທີ່ຮັ່ງມີ, ເຂັ້ມແຂງຂອງໂລກໄດ້ສຳເລັດ.

ຢູ່ໃນບົດລາຍງານຂອງປະທານ ໄກສອນ ພົມວິຫານ, ນາຍົກລັດຖະມົນຕີ ສາທາ ລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ກ່ຽວກັບສະພາບການໃນປີທີ່ຜ່ານມາ, ກ່ຽວກັບທິດທາງ, ໜ້າ ທີ່ປະຕິວັດໃນໄລຍະໃໝ່ ແລະ ທິດທາງວຽກງານຕົວຈິງ ໃນປີ 1977, ... “ບົນເສັ້ນທາງກ້າວຂຶ້ນສັງຄົມນິຍົມ, ພວກເຮົາມີ ເງື່ອນໄຂອັນພຽງພໍທາງດ້ານອັດຕະວິໄສ, ພາວະວິໄສທີ່ສະດວກທີ່ ສຸດ...”[5,161]. ເຊິ່ງປະທານ ໄກສອນ ພົມວິຫານ ຍັງໄດ້ຊີ້ແຈ້ງ ເຖິງບັນດາເງື່ອນໄຂ ທີ່ມີລັກສະນະອັດຕະວິໄສ ແລະ ພາວະວິໄສ ຄື: ຕໍ່ກັບເງື່ອນໄຂອັດຕະວິໄສ “ພວກເຮົາມີແນວທາງປະຕິວັດອັນ ຖືກຕ້ອງ ແລະ ໄດ້ຜ່ານບົດທົດສອບ, ມີການນຳພາ ແລະ ຊີ້ນຳອັນ ຖືກຕ້ອງຂອງພັກ ແລະ ລັດ, ມີປະຊາຊົນບັນດາຊົນຊາດທີ່ພິລະອາດ ຫານໃນການຕໍ່ສູ້, ຂະຫຍັນໝັ່ນພຽນໃນການອອກແຮງງານ ແລະ ພ້ອມແລ້ວທີ່ຈະຕອບສະໜອງຄຳຮຽກຮ້ອງຂອງພັກ ແລະ ລັດ” [5,162]; ຕໍ່ກັບເງື່ອນ ໄຂພາວະວິໄສ, ປະທານ ໄກສອນ ພົມວິຫານ ໄດ້ເນັ້ນໜັກວ່າ: “ພວກເຮົາໄດ້ຮັບການຊ່ວຍເຫຼືອຢ່າງ ສຸດຈະຫຼິດໃຈ ຂອງບັນດາປະ ເທດສັງຄົມນິຍົມອ້າຍນ້ອງ ແລະ ເພື່ອນມິດໃນທົ່ວ 5 ທະວີບ”[5,162].

ໄຊຊະນະອັນຍິ່ງໃຫຍ່ ແຫ່ງພາລະກິດຕໍ່ສູ້ປົດປ່ອຍຊາດລາວ ເຮົາ ກໍ່ເປັນຫຼັກຖານສຳຄັນ ທີ່ສະແດງໃຫ້ເຫັນເຖິງນ້ຳໃຈສາກົນກຳ ມາຊີບສາມັກຄີຕໍ່ສູ້ ຂອງບັນດາປະເທດອ້າຍນ້ອງສັງຄົມນິຍົມ, ປະທານ ໄກສອນ ພົມວິຫານ ກໍ່ເຄີຍໄດ້ຢືນຢັນສະເໝີມາວ່າ: “ປະຊາຊົນລາວ ແລະ ການປະຕິວັດລາວ, ຄັນບໍ່ມີແນວຫຼັງອັນແ ໜ້ນແກ່ນ ແລະ ບໍ່ມີການຊ່ວຍເຫຼືອອັນໃຫຍ່ຫຼວງ, ລ້ຳຄ່າ ດ້ວຍ ຈິດໃຈສາກົນອັນຜ່ອງໃສ ທັງວັດຖຸ, ຈິດ ໃຈ ແລະ ເລືອດເນື້ອ ຈາກ ພັກ - ລັດ ແລະ ປະຊາຊົນຫວຽດນາມ ແລະ ຄັນບໍ່ມີກ້ອນກຳລັງສຳ ພັນທະມິດອັນຍິ່ງໃຫຍ່ ລະຫວ່າງ 3 ຊາດອິນດູຈີນ ບໍ່ມີການ ຊ່ວຍເຫຼືອອັນຍິ່ງໃຫຍ່ ຂອງສະຫະພາບໂຊວຽດ, ສປ ຈີນ ແລະ ບັນດາປະເທດສັງຄົມນິຍົມ ແມ່ນລາວ ພຽງ 3 ລ້ານຄົນ ບໍ່ອາດຕີເອົາ ຊະນະຈັກກະພັດຮຸກຮານ ສອງໂຕທີ່ຮັ່ງມີ ເຂັ້ມແຂງຂອງໂລກ ແລະ ປົດປ່ອຍປະເທດຊາດມາໄດ້ຢ່າງສົມບູນ” (ນາວຕົວຢ່າງ, 2008).

ແນວຄິດ ໄກສອນ ພົມວິຫານ ກ່ຽວກັບນ້ຳໃຈສາກົນກຳມາຊີບ ແມ່ນເກີດມາຈາກສະພາບແວດລ້ອມທັງພາຍໃນ ແລະ ພາຍນອກ ໃນ ໄລຍະການຕໍ່ສູ້ປົດປ່ອຍຊາດ, ໄດ້ກາຍເປັນພື້ນຖານສຳຄັນ ໃຫ້ແກ່ ການປ່ຽນແປງໃໝ່ຢ່າງຮອບດ້ານ ຂອງພັກປະຊາ ຊົນປະຕິວັດລາວ, ໂດຍສະເພາະແມ່ນ ໃນຂົງເຂດວຽກງານພົວພັນຕ່າງປະເທດ ເຊິ່ງພັກ ໄດ້ຢຶດໝັ້ນ ຄື: ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ.

3. ການສົມທົບແໜ້ນນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈ ສາກົນກຳມາຊີບອັນແທ້ຈິງ ໃນການກ້າວຂຶ້ນສັງຄົມນິຍົມ ຢູ່ປະເທດ ເຮົາ

ການເຂົ້າເປັນສະມາຊິກພັກກອມມູນິດອິນດູຈີນ ແມ່ນຂີດໝ າຍສຳຄັນໃນຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງປະທານ ໄກສອນ ພົມວິຫານ, ມັນໄດ້ສະແດງໃຫ້ເຫັນເຖິງການເຕີບໃຫຍ່ທາງ ດ້ານຄຸນທາດການເມືອງ ຈາກການເປັນນັກຮັກຊາດທີ່ຕໍ່ສູ້ເພື່ອປົດ ປ່ອຍຊາດ ມາເປັນນັກຮັກຊາດ - ນັກກອມມູນິດ ທີ່ຕໍ່ສູ້ເພື່ອ ເອກະລາດແຫ່ງຊາດ ແລະ ເພື່ອອຸດົມການສັງຄົມນິຍົມ, ຢຶດໝັ້ນທິດ ສະດີມາກ - ເລນິນ ເພື່ອໝູນໃຊ້ ແລະ ເສີມຂະຫຍາຍຢ່າງປະດິດສ້າງ, ສົມທົບແໜ້ນນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊີບ ອັນແທ້ຈິງ ໃນການກ້າວຂຶ້ນສັງຄົມນິຍົມ ຢູ່ປະເທດເຮົາ. ປະທານ ໄກສອນ ພົມວິຫານ ໄດ້ຂຽນໄວ້ວ່າ: “ພວກເຮົາມີກຳລັງແຮງແຫ່ງ ຄວາມສາມັກຄີອັນຍິ່ງໃຫຍ່ ຂອງປວງຊົນທັງຊາດ, ຂອງບັນດາຊົນ ຊາດອ້າຍນ້ອງ ທີ່ຜູກພັນກັນໃນມະຫາຄອບຄົວແນວໂຮມເອກະພາບ ແຫ່ງຊາດ” (ພົມວິຫານ, 1977). ໂດຍເພີ່ນໄດ້ຊີ້ໃຫ້ເຫັນເຖິງກຳລັງ ຄວາມສາມັກຄີທີ່ເປັນປຶກແຜ່ນ ຂອງປະຊາຊົນບັນດາເຜົ່າ ພ້ອມພຽງ ກັນຕໍ່ສູ້ເພື່ອປົດປ່ອຍຊາດ ແລະ ຮ່ວມກັບຂະບວນການຕໍ່ສູ້ ເພື່ອ ສັນຕິພາບໃນທົ່ວໂລກ.

ໂດຍເລີ່ມຈາກລັດທິມາກ - ເລນິນ ທີ່ເປັນຄັນທຸງ ຂອງຄວາມ ສາມັກຄີເປັນປຶກແຜ່ນໃນຊາດ ບົນພື້ນຖານພັນທະພາບກຳມະກອນ,

ຊາວຜູ້ອອກແຮງງານເປັນກົກ ແລະ ສາມັກຄີ ລະຫວ່າງ ຊາດເຮົາ ກັບສາກົນອັນຜ່ອງໃສ, ການຕໍ່ສູ້ປະຕິວັດປົດປ່ອຍຊາດ, ການປົກ ປັກຮັກສາ ແລະ ສ້າງສາປະເທດຊາດ ຂອງປະຊາຊົນເຮົາ - ບໍ່ພຽງ ແຕ່ເປັນຂອງຊາດເຮົາເທົ່ານັ້ນ, ແຕ່ກາຍເປັນພາກສ່ວນໜຶ່ງ ຂອງການ ປະຕິວັດອິນດູຈີນ ແລະ ການປະຕິວັດໂລກ. ເພື່ອແນໃສ່ການສ້າງ ຄວາມສາມັກຄີ ແລະຍາດແຍ່ງການສະໜັບສະໜູນ ຈາກບັນດາ ປະເທດອ້າຍນ້ອງສັງຄົມນິຍົມ ໃນການເຄື່ອນໄຫວຕໍ່ສູ້ປົດປ່ອຍຊາດ , ປະ ທານ ໄກສອນ ພົມວິຫານ ກໍ່ໄດ້ມີທັດສະນະການພົວພັນ ຮ່ວມມື ກັບບັນດາປະເທດສັງຄົມນິຍົມອື່ນໆ ຄືດັ່ງລຸ່ມນີ້:

- ຕໍ່ກັບຄວາມສາມັກຄີ ຖານເພື່ອນມິດສະຫາຍ, ອ້າຍນ້ອງຄື ຫວຽດນາມ, ປະ ທານ ໄກສອນ ພົມວິຫານ ກໍ່ໄດ້ປະພັນເປັນປົດ ກອນໄວ້ວ່າ: “ພູອາດຖືກເຊາະເຈື່ອນ, ແມ່ນ້ຳລຳເຊ ອາດຈະເຫືອດ ແຫ້ງ, ແຕ່ສາຍພົວພັນມິດຕະພາບລາວ - ຫວຽດນາມ ຈະໝັ້ນຄົງ ຂະນິງແກ່ນຊໍ້ອກາລະນານ”.

- ຕໍ່ກັບສາຍພົວພັນ ລະຫວ່າງລາວ - ຈີນ ແມ່ນສາຍພົວພັນ ທີ່ກຳເນີດເກີດຂຶ້ນບົນພື້ນຖານການຮ່ວມມື ລະຫວ່າງປະທານ ໄກສອນ ພົມວິຫານ ແລະ ປະທານ ເຕີ້ງສ່ຽວຜິງ, ໂດຍເພີ່ນໄດ້ກ່າວ ວ່າ: “ພວກເຮົາມີຄວາມຮັກແພງຖະໜອມມິດຕະພາບ ກັບ ປະຊາຊົນຈີນ ຕະຫຼອດມາ. ພວກເຮົາຢືນຢັນຢ່າງສະເໝີຕົ້ນສະເໝີ ປາຍວ່າ ຈະບໍ່ລືດລະໃນຄວາມບາກບັ່ນພະຍາຍາມ ເພື່ອຮັກສາ ມິດຕະພາບດັ່ງກ່າວ”(ສະຖາບັນວິທະຍາສາດສັງຄົມແຫ່ງຊາດ, 2011, ໜ້າ 104].

- ຕໍ່ກັບສະຫະພາບໂຊວຽດ ໃນໄລຍະທີ່ບໍ່ທັນລົ້ມລະລາຍ, ປະທານ ໄກສອນ ພົມວິຫານ ເຄີຍກ່າວໄວ້ວ່າ: “ການພົວພັນຮ່ວມ ມືສາກົນ ແລະ ການຮ່ວມມືຮອບດ້ານກັບສະຫະພາບໂຊວຽດ ທີ່ຍິ່ງ ໃຫຍ່ ແລະ ປະເທດສັງຄົມນິຍົມອ້າຍນ້ອງ ເປັນຫີນສີລາໃນ ນະໂຍບາຍຕ່າງປະເທດ ຂອງພວກເຮົາ, ມັນເປັນສິ່ງຄ້ຳປະກັນທີ່ ໜັກແໜ້ນໃຫ້ແກ່ພາລະກິດປົກປັກຮັກສາປະເທດຊາດ ແລະ ສ້າງ ສັງຄົມນິຍົມຂອງພວກເຮົາ”(ພົມວິຫານ, 1981, ໜ້າ 128).

ແນວຄິດ ໄກສອນ ພົມວິຫານ ກ່ຽວກັບການສົມທົບແ ໜ້ນນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊີບອັນແທ້ຈິງ ໃນການກ້າວຂຶ້ນສັງຄົມນິຍົມ ຢູ່ປະເທດເຮົາ ຍັງສະແດງອອກຢ່າງ ຈະແຈ້ງໃນກ້ອນສາມັກຄີພິເສດຮອບດ້ານ, ຫາຍາກ, ຍາວນານ ໃນ ພາລະກິດຕໍ່ສູ້ປົດປ່ອຍຊາດ ລະຫວ່າງສອງຊາດລາວ - ຫວຽດ ນາມ. ຕະຫຼອດປະຫວັດສາດແຫ່ງການຕໍ່ສູ້ຜ່ານມາ, ບໍ່ວ່າຢູ່ບ່ອນໃດ ແລະ ໃນກໍລະນີໃດ, ລະຫວ່າງສອງຊາດລາວ - ຫວຽດນາມ ເວລາ ໃດກໍ່ໄດ້ຮ່ວມເປັນຮ່ວມຕາຍນຳກັນ, ພ້ອມກັນເຮັດການປະຕິວັດ ປົດປ່ອຍຊາດ. ອາດເວົ້າໄດ້ວ່າ ໄຊຊະນະຂອງການປະຕິວັດລາວ ກໍ່ ເປັນໄຊຊະນະລວມ ຂອງສອງປະເທດ. ປະທານ ໄກສອນ ພົມວິຫານ ໄດ້ເນັ້ນໜັກວ່າ: “ໃນກອງກຳລັງສາມັກຄີຮ່ວມສຳພັນສູ້ຮົບ ລະຫວ່າງ ປະຊາຊົນບັນດາປະເທດໃນອິນດູຈີນ ນັ້ນ, ການຮ່ວມສຳພັນແບບສູ້ ຮົບ ລະຫວ່າງ ການປະຕິວັດລາວ ກັບການປະຕິວັດຫວຽດນາມ, ລະຫວ່າງ ປະຊາຊົນລາວ ກັບປະຊາຊົນຫວຽດນາມ ເປັນອັນພິເສດທີ່ ຫາຍາກ. ອັນນັ້ນ, ມັນບໍ່ພຽງແຕ່ເປັນຮ່ວມສຳພັນອັນໜຶ່ງ ທີ່ໄດ້ຮັບ ການສ້າງຕັ້ງຂຶ້ນບົນພື້ນຖານ ຂອງສາຍພົວພັນແບບພິເສດເທົ່ານັ້ນ, ແຕ່ ຫາກຍັງມີການຮ່ວມສຳພັນອັນໜຶ່ງເພື່ອການດຳລົງຄົງຕົວຂອງຊາດທັງ ສອງ. ເພື່ອເອກະລາດອັນໝັ້ນຄົງ ແລະ ການຂະ ຫຍາຍຕົວ ວັດທະນາ ຖາວອນ ຂອງທັງສອງປະເທດ”(ພົມວິຫານ, 1985, ໜ້າ 403).

ບົນຈິດໃຈຢຶດໝັ້ນຫຼັກການສິດຕັດສິນໃຈດ້ວຍຕົນເອງ ຂອງ ແຕ່ລະປະເທດ, ແຕ່ລະຊາດທີ່ ອ.ອິ. ເລນິນ ໄດ້ຍົກຂຶ້ນ ແລະ ກາຍເປັນແນວຄິດຊີ້ນຳແຫ່ງການເຄື່ອນ ໄຫວຂອງສາກົນທີ II (ສາກົນ ກອມມູນິດ) ໃນຕະຫຼອດການເຄື່ອນໄຫວ ຂອງແຕ່ລະພັກ, ໂດຍ ປະທານ ໄກສອນ ພົມວິຫານ ໄດ້ເນັ້ນໜັກເຖິງຄວາມຕັດສິນໃຈອັນ ສູງສົ່ງໃນການຮ່ວມສຳພັນສູ້ຮົບຂອງສອງພັກ, ສອງຊາດວ່າ: “ໃນການ ຮ່ວມມືສຳພັນ ລະຫວ່າງ 2 ພັກ, ຕ້ອງຮັບປະກັນຄວາມສະໝັກໃຈ, ສະເໝີພາບ, ພ້ອມກັນຮັບຜິດ ຊອບ, ສາມັກຄີຊ່ວຍເຫຼືອກັນຕາມ ຄວາມສາມາດຕົວຈິງ ຂອງແຕ່ລະພັກ; ເຄົາລົບເອກະລາດ, ເປັນເຈົ້າ ຕົນເອງຂອງກັນ ແລະກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງແຕ່ ລະປະເທດ, ແຕ່ລະພັກ ບໍ່ບີບບັງຄັບໃຫ້ປະຕິບັດຕາມຄຳເຫັນຂອງ ຝ່າຍໃດຝ່າຍໜຶ່ງ, ຊ່ວຍເຫຼືອກັນ ແຕ່ບໍ່ເຮັດແທນໜ້າທີ່ວຽກງານ ຂອງ ແຕ່ລະພັກ, ແຕ່ລະປະເທດ” (ສະພາແຫ່ງຊາດ, 2023).

ອາດເວົ້າໄດ້ວ່າ ໝາກຜົນແຫ່ງໄຊຊະນະ, ມູນເຊື້ອນ້ຳໃຈແຫ່ງ ຄວາມສາມັກຄີສາມັກຄີແບບພິເສດ ແລະ ມິດຕະພາບອັນຍິ່ງໃຫຍ່ ຂອງສອງຊາດ ລາວ - ຫວຽດນາມ ໄດ້ຜ່ານໄລຍະແຫ່ງປະຫວັດສາດ ອັນລະອິດລະອ້ຽວ, ໃນນັ້ນ ສິ່ງທີ່ເປັນປັດໄຈຕັດສິນເດັດຂາດໃຫ້ແກ່ ການປະຕິວັດຊາດນັ້ນ ແມ່ນການນຳໃຊ້ກຳລັງປະກອບອາວຸດທີ່ເຂັ້ມ ແຂງ ເຊິ່ງເປັນອາວຸດອັນແຫຼມຄົມ 2 ຂອງພັກ ທີ່ມີຈຸດກຳເນີດເຕີບ ໃຫຍ່ບົນແປວໄຟແຫ່ງສົງຄາມປົດປ່ອຍຊາດ. ນ້ຳໃຈສາມັກຄີຮ່ວມ ສຳພັນສູ້ຮົບ ລະຫວ່າງ ກອງທັບປະຊາ ຊົນລາວ ແລະ ກອງທັບ ປະຊາຊົນຫວຽດນາມອ້າຍນ້ອງ ແມ່ນສັນຍະລັກທີ່ມີຊີວິດຊີວາ ຢູ່ໃນ ການພົວພັນແບບພິເສດລາວ - ຫວຽດນາມ, ສຳພັນສາມັກຄີສູ້ຮົບ ຮ່ວມກັບບັນ ດາກົມກອງທະຫານອາສາສະໝັກຫວຽດນາມ ໄດ້ ປະກອບສ່ວນເຂົ້າໃນທຸກໄຊຊະນະຂອງພາລະກິດປົດປ່ອຍຊາດ , ບັນດາພະນັກງານນັກຮົບ ແລະ ຊ່ຽວຊານການທະຫານຫວຽດນາມ

ໄດ້ຄຽງບ່າຄຽງໄຫຼ່ສູ້ຮົບຮ່ວມກັບກອງທັບ ແລະ ປະຊາຊົນລາວ ຢ່າງ ເນື່ອງ ນິດລຽນຕິດ, ໃກ້ຊິດຕິດແທດກັບໜ້າທີ່ວຽກງານ, ອາດຫານ ຊານໄຊໃນການສູ້ຮົບ ຢູ່ທຸກສະໜາມຮົບ.

ຕະຫຼອດໄລຍະແຫ່ງການເຕີບໃຫຍ່ສູ້ຮົບມີໄຊ ຂອງ 2 ກອງທັບລາວ - ຫວຽດ ນາມ ອ້າຍນ້ອງ ໄດ້ຜ່ານບົດທົດສອບ ນານາປະການ ບໍ່ວ່າຈະຢູ່ໃນໄລຍະແຫ່ງການຕໍ່ສູ້ປົດປ່ອຍຊາດ ກໍ່ຄື ໄລຍະແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. ດ້ວຍນ້ຳໃຈ ແລະ ມູນເຊື້ອແຫ່ງຄວາມສາມັກຄີຮ່ວມສຳພັນສູ້ຮົບ ທີ່ ມີມາຍາວນານນັ້ນກອງທັບລາວ - ຫວຽດນາມ ໄດ້ສືບຕໍ່ຊ່ວຍເຫຼືອ ເຊິ່ງກັນ ແລະກັນ ບໍ່ວ່າຈະຢູ່ໃນສະຖາ ນະການໃດ, ໃນເງື່ອນໄຂທີ່ ຫຍຸ້ງຍາກ, ສຸກ ຫຼື ທຸກ ທັງສອງຝ່າຍລ້ວນແຕ່ແບ່ງປັນໃຫ້ແກ່ກັນ ນັບມື້ຍິ່ງໄດ້ຮັບການເຊີດຊູປັບປຸງ, ຂະຫຍາຍຢ່າງຮອບດ້ານ, ໄດ້ຍົກ ສູງສ້າງຄວາມເຊື່ອໝັ້ນ ແລະ ບໍລິສຸດຕໍ່ກັນຂອງການຮ່ວມມືທຸກ ດ້ານ ນັບທັງກຳລັງໜວງ ແລະ ກຳລັງທ້ອງຖິ່ນ ບໍ່ວ່າຈະດ້ານ ການເມືອງ, ການທະຫານ, ພາລາທິການ ແລະ ເຕັກນິກການກໍ່ສ້າງ ພະນັກງານ, ການຊ່ວຍເຫຼືອດ້ານຕ່າງໆ ທັງໝົດນີ້ ເປັນການ ປະກອບສ່ວນຢ່າງຕັ້ງໜ້າ ໃນການພັດທະນາກອງທັບ ຂອງແຕ່ລະ ປະເທດ ເພື່ອເປັນການຍົກລະດັບທີ່ຕັ້ງ, ພາລະບົດບາດກອງທັບ ຂອງສອງປະເທດ ອອກສູ່ເວທີພາກພື້ນ ແລະ ສາກົນ.

ວິລະກຳອັນລ້ຳເລີດ, ໝາກຜົນແຫ່ງໄຊຊະນະທີ່ສອງກອງທັບ ລາວ - ຫວຽດ ນາມ ຍາດມາໄດ້ໃນພາລະກິດຕໍ່ສູ້ປົດປ່ອຍປະເທດ ຊາດ ກໍ່ຄືພາລະກິດປ່ຽນແປງໃໝ່ ໄດ້ກາຍເປັນແວ່ນແຍງອັນໃສ ແຈ້ງ ແລະ ກາຍເປັນມູນມໍລະດົກອັນລ້ຳຄ່າທີ່ເປັນຫຼັກຖານຢັ້ງຢືນ ໃຫ້ຊາວໂລກຮັບຮູ້ເຖິງນ້ຳໃຈຄວາມສາມັກຄີແບບພິເສດ ແລະ ມິດຕະພາບອັນຍິ່ງໃຫຍ່ ລະຫວ່າງສອງຊາດ ລາວ - ຫວຽດນາມ , ເປັນການເຮັດໃຫ້ພະນັກງານ, ນັກຮົບສອງກອງທັບ ໄດ້ສືບທອດ, ຮຽນຮູ້ເຖິງນ້ຳໃຈຄວາມສາມັກຄີຮ່ວມສຳພັນສູ້ຮົບ, ຄວາມອົງອາດ ກ້າຫານ ແລະ ການເສຍສະລະຊີວິດ ເພື່ອປະເທດຊາດ, ເພື່ອປະຊາ ຊົນ ນ້ຳໃຈແຫ່ງຄວາມເປັນມິດແທ້ຖາວນສະຫາຍອ້າຍນ້ອງ ດັ່ງໃນບົດ ເພງປະຕິວັດຫວຽດນາມ “ເຈື່ອງເຊິນດີ ເຈື່ອງເຊິນເຕີຍ - TRƯỜNG SƠN ĐÔNG TRƯỜNG SƠN TÂY” ສອງ ເປັນພູຫຼວງ ກໍ່ຄືສອງຊາດ ລາວ - ຫວຽດນາມ ທີ່ພ້ອມກັນອີງຫຼັງໃສ່ ສາຍພູຫຼວງທີ່ສູງສະຫງ່າ ທີ່ບໍ່ສາມາດຕັດແຍກອອກຈາກັນໄດ້.

III. ການໝູນໃຊ້ ແລະ ການເສີມຂະຫຍາຍຄຸນຄ່າ ຂອງແນວ ຄິດ ໄກສອນ ພົມວິຫານ ກ່ຽວກັບການສົມທົບແໜ້ນນ້ຳໃຈຮັກຊາດ ອັນດຸດດື່ມ ກັບນ້ຳໃຈສາກົນກຳມາຊີບອັນແທ້ຈິງ ໃນການກ້າວຂຶ້ນ ສັງຄົມນິຍົມ ຢູ່ປະເທດເຮົາ.

1. ການໝູນໃຊ້ແນວຄິດ ໄກສອນ ພົມວິຫານ ກ່ຽວກັບການ ສົມທົບແໜ້ນນ້ຳໃຈຮັກຊາດອັນດຸດດື່ມ ກັບນ້ຳໃຈສາກົນກຳມາຊີບ ໃນການກ້າວຂຶ້ນສັງຄົມນິຍົມ ຢູ່ປະເທດເຮົາ.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ, ຍາດໄດ້ເອກະລາດ, ອຳນາດອະທິປະໄຕຢ່າງສົມບູນແລ້ວ, ພັກ - ລັດ ໄດ້ນຳພາປະຊາຊົນ ລາວໃນທົ່ວປະເທດ ດຳເນີນການປັບປຸງ, ອຳນາດແຜ່ສີງຄາມ ແລະ ປ່ຽນແປງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ, ຕັ້ງໜ້າສ້າງພື້ນຖານເສດຖະກິດດ້ວຍການເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ນຳໃຊ້ເສດຖະກິດສອງ ພາກສ່ວນ (ລັດ ແລະ ລວມໝູ່), ປິດປະຕູຕໍ່ການພົວພັນກັບໂລກພາຍ ນອກ. ຜ່ານການຈັດຕັ້ງປະຕິບັດເປັນໄລຍະເວລາເກືອບໜຶ່ງທົດສະວັດ ຈຶ່ງເຫັນວ່າ ແມ່ນສິ່ງທີ່ຜິດພາດ ແລະ ບໍ່ສອດຄ່ອງກັບສະພາບຄວາມ ເປັນຈິງຂອງປະເທດ ເຊິ່ງປະທານ ໄກສອນ ພົມວິຫານ ໄດ້ຢືນຢັນວ່າ: “ໃນສູ່ມື້ນີ້ ການສຳພັນກັນ, ການຮ່ວມມືກັນ ລະຫວ່າງ ບັນດາປະ ເທດໃນແຕ່ລະພາກພື້ນ ໄດ້ກາຍເປັນທ່າອ່ຽງທົ່ວໄປຂອງຍຸກສະໄໝ... ພ້ອມກັນນັ້ນ, ພວກເຮົາກໍ່ຕ້ອງຮັບຮູ້ເປີດກວ້າງການພົວພັນຮ່ວມມື ກັບບັນດາປະເທດພວມພັດທະນາ, ກັບບັນດາອົງການຈັດຕັ້ງສາກົນ ແລະ ນັບທັງບັນດາປະເທດທຶນນິຍົມ ບົນພື້ນຖານຮັບປະກັນເອກະ ລາດ, ອະທິປະໄຕຂອງກັນ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ. ເຮັດ ໄດ້ຄືແນວນັ້ນ ແມ່ນພວກເຮົາຮູ້ສົມທົບທ່າແຮງ ຂອງປະເທດເຮົາ ກັບກຳລັງແຮງຂອງຍຸກສະໄໝ ເພື່ອນຳໃຊ້ບັນດາຜົນສຳເລັດ ທາງດ້ານ ເສດຖະກິດ, ວິທະຍາສາດ - ເຕັກນິກ, ນຳໃຊ້ບັນດາຂໍ້ສະດວກ ເພື່ອ ແນໃສ່ຂຸດຄົ້ນ ແລະ ຂະຫຍາຍທ່າດີຂອງປະເທດເຮົາ”(ພົມວິຫານ, 1987, ໜ້າ 438-439].

ບົນພື້ນຖານໝູນໃຊ້ ແລະ ເສີມຂະຫຍາຍແນວຄິດ ໄກສອນ ພົມວິຫານ ກ່ຽວກັບການພົວພັນຕ່າງປະເທດ ເວົ້າລວມ, ເວົ້າສະເພາະ ແມ່ນການສົມທົບແໜ້ນນ້ຳໃຈຮັກຊາດອັນດຸດດື່ມ ກັບນ້ຳໃຈສາກົນ ກຳມາຊີບອັນແທ້ຈິງ ໃນການກ້າວຂຶ້ນສັງຄົມນິ ຍົມ ຢູ່ປະເທດເຮົາ. ມາຮອດປີ 1986 ພັກປະຊາຊົນປະຕິວັດລາວ ໄດ້ດຳເນີນພາລະກິດ ປ່ຽນແປງໃໝ່ ແລະ ໄດ້ມີການເປີດປະຕູສູ່ໂລກພາຍນອກ, ໂດຍເລີ່ມ ມີການພົວພັນ, ຮ່ວມມື ກັບຕ່າງປະເທດນັບມື້ນັບເພີ່ມຂຶ້ນ, ອັນໄດ້ ເຮັດໃຫ້ບັນດາປະເທດໃນໂລກ ສາ ມາດຮັບຮູ້ເຖິງຖານະບົດບາດ ຂອງປະເທດເຮົາຕໍ່ເວທີສາກົນ, ເຮັດໃຫ້ການປະຕິບັດແນວທາງການ ຕ່າງປະເທດຂອງລາວເຮົາ ນັບມື້ຍິ່ງມີຄວາມໝາຍຄວາມສຳຄັນ ຕໍ່ ພາລະ ກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ບັນດາ

ປະເທດເພື່ອນມິດ ນັບມື້ຍິ່ງມີການຍົກລະດັບ ແລະ ເພີ່ມທະວີສາຍພົວພັນທາງການທູດກັບປະເທດເຮົາຫຼາຍຂຶ້ນ ໂດຍບໍ່ໄດ້ຈຳແນກທາງດ້ານລະບອບການເມືອງທີ່ແຕກຕ່າງກັນ ບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ. ໂດຍເຫັນໄດ້ຄວາມສຳຄັນດັ່ງກ່າວ, ປະທານໄກສອນ ພົມວິຫານ ໄດ້ວາງແນວທາງການຕ່າງປະເທດ ເພື່ອໃຫ້ສອດຄ່ອງກັບໄລຍະໃໝ່ ຂອງການປະຕິວັດຂອງປະເທດເຮົາ, ເຫັນໄດ້ກ່າວວ່າ: “ປະຕິບັດນະໂຍບາຍຕ່າງປະເທດ ເອກະລາດ, ສັນ ຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະລາດ, ສັນຕິພາບ ແລະ ວັດທະນາຖາວອນ, ກ້າວໜ້າທາງດ້ານສັງຄົມ, ປະກອບສ່ວນຢ່າງສົມກຽດເຂົ້າໃນພາລະກິດຕໍ່ສູ້ ເພື່ອປະຕິບັດສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ ຢູ່ໃນພາກພື້ນອາຊີອາຄະເນ ແລະ ໃນໂລກ” (ພົມວິຫານ, 1985).

ຕະຫຼອດໄລຍະເວລາທີ່ຜ່ານມາ, ທ່າມກາງສະຖານະການຂອງໂລກ ແລະ ພາກພື້ນ ປະເຊີນກັບຄວາມຫຍຸ້ງຍາກສັບສົນ, ສະພາບການໂລກທີ່ຜັນແປຢ່າງໄວວາ ແລະ ຄາດເດົາໄດ້ຍາກ ໄດ້ເຮັດໃຫ້ປະເທດເຮົາຕ້ອງປະເຊີນໜ້າ ກັບສິ່ງທ້າທາຍຫຼາຍຢ່າງ ແຕ່ດ້ວຍຫຼັກໝັ້ນ ແລະ ອຸດົມການທີ່ໜັກແໜ້ນກ້າແກ່ນ ບວກກັບສາຍພົວພັນອັນສະໜິດ ແໜ້ນກັບບັນດາປະເທດເພື່ອນມິດ, ເພື່ອນຮ່ວມຊາຕາກຳ ແລະ ຮ່ວມອຸດົມການສັງຄົມນິຍົມ ເຊັ່ນ: ຫວຽດນາມ, ຈີນ, ກູບາ ແລະ ເກົາຫຼີເໜືອ ຍັງຄົງຮັດແໜ້ນດ້ວຍນ້ຳໃຈຮັກແພງ, ຊ່ວຍເຫຼືອເຊິ່ງກັນ ແລະກັນຕະຫຼອດມາ.

ດ້ວຍການເອົາໃຈໃສ່ ແລະ ຖືສຳຄັນຕໍ່ວິໄສທັດ ໃນການເປີດກວ້າງການພົວພັນຮ່ວມມື ກັບພາຍນອກອັນຖືກຕ້ອງ ຂອງປະທານໄກສອນ ພົມວິຫານ ແລະ ບັນດາແນວທາງການຕ່າງປະເທດຂອງພັກໃນແຕ່ລະໄລຍະ. ມາຮອດໄລຍະປັດຈຸບັນ, ປະເທດເຮົາໄດ້ສ້າງສາຍພົວພັນການທູດສອງຝ່າຍ ຄື: ລະຫວ່າງ ລາວ ກັບຄູ່ຮ່ວມສັນຍາພາຄີ ແລະ ສົນທິສັນຍາຫຼາຍຝ່າຍ ກັບຄູ່ຮ່ວມສັນຍາກັບຫຼາຍປະເທດທີ່ເປັນພະຫຸພາຄີ, “ມີການພົວພັນການທູດກັບ 149 ປະເທດ (ຈາກ 193 ປະເທດທົ່ວໂລກ, ຫຼ້າສຸດແມ່ນປະເທດສາທາລະນະລັດ ບາຮຸນດີ); ມີສຳນັກງານຜູ້ຕາງໜ້າການທູດຂອງ ສປປ ລາວ ຢູ່ຕ່າງປະເທດ 43 ແຫ່ງ, ໃນນັ້ນ ມີສະຖານເອກອັກຄະລັດຖະທູດ 28 ແຫ່ງ, ສຳນັກງານຜູ້ຕາງໜ້າຖາວອນ 3 ແຫ່ງ, ສະຖານກົງສຸນໃຫຍ່ 10 ແຫ່ງ, ຫ້ອງການກົງສຸນ 1 ແຫ່ງ (ພະແນກການຕ່າງປະເທດ ນະຄອນຫລວງວຽງຈັນ, 2023), “ກົງສຸນກິດຕິມະສັກ ຂອງ ສປປ ລາວ ຢູ່ຕ່າງປະເທດ 19 ແຫ່ງ, ສະຖານທູດຕ່າງປະເທດ ມີສຳນັກງານ ຢູ່ລາວ 28 ແຫ່ງ, ກົງສຸນໃຫຍ່ 6 ແຫ່ງ, 18 ອົງການສາກົນທີ່ບໍ່ຂຶ້ນກັບລັດຖະບານ ແລະ ມີກົງສຸນກິດຕິມະສັກ 18 ປະເທດ ປະຈຳຢູ່ລາວ, ມີດ່ານສາ ກົນ 28 ແຫ່ງ, ໄດ້ສ້າງຕັ້ງສະມາຄົມມິດຕະພາບກັບ 18 ປະເທດ. ນອກຈາກນັ້ນ, ສປປ ລາວເຮົາ ຍັງມີການພົວພັນກັບ 140 ພັກການເມືອງໃນທົ່ວໂລກ”(ຄະນະໂຄສະນາອົບຮົມສູນກາງພັກ, 2023, ໜ້າ 9), ບົນພື້ນຖານປະຕິບັດນະໂຍບາຍ “ສືບຕໍ່ຂະຫຍາຍການພົວພັນກັບທຸກປະເທດໃນໂລກ ໂດຍບໍ່ຈຳ ແນກລະບອບການເມືອງ ແລະ ສັງຄົມທີ່ແຕກຕ່າງກັນ ບົນຫຼັກການແຫ່ງການເຄົາລົບເອກະລາດ ປະຊາທິປະໄຕ ສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ”. ພ້ອມກັນນັ້ນ, ສປປ ລາວ ຍັງໄດ້ມີການຮ່ວມມືນັບມື້ນັບເພີ່ມຂຶ້ນ ແລະ ມີຫຼາຍຮູບຫຼາຍແບບການຮ່ວມມື ສະແດງອອກ ຄື: ເຂົ້າເປັນສະມາຊິກອົງການຊັບສິນທາງປັນຍາໂລກ (WIPO) ໃນປີ 1995; ເຂົ້າເປັນສະມາຊິກຂອງສະມາຄົມພາກພື້ນອາຊີຕາເວັນອອກ ສ່ຽງໃຕ້ (ASEAN) ໃນວັນທີ 23/7/1997; ເປັນເຈົ້າພາບໃນການຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 10 (ປີ 2004); ເຂົ້າຮ່ວມເປັນສະມາຊິກອົງກອນການຄ້າໂລກ(WTO) ໃນປີ 2012; ເຂົ້າຮ່ວມເປັນສະມາຊິກປະຊາຄົມເສດຖະກິດອາຊຽນ (AEC) ໃນປີ 2015; ຮ່ວມມືດ້ານເສດຖະກິດພາກພື້ນ ອາຊີ - ປາຊີຟິກ (APEC) ແລະ ການຮ່ວມມືກຳປູເຈຍ - ລາວ - ຫວຽດນາມ - ມຽນມາ (CLMV); ເຂົ້າເປັນສະມາຊິກອົງການຮ່ວມມື ລະຫວ່າງ ອາຊີ - ເອຣົບ (ASEM), ໃນນັ້ນ ຍັງເຄີຍເປັນເຈົ້າພາບຈັດກອງປະຊຸມຂັ້ນຕ່າງໆ ໃນລະດັບພາກພື້ນ ແລະ ສາກົນມາຢ່າງຕໍ່ເນື່ອງ..., ເຫດການພົ້ນເດັ່ນໜຶ່ງ ໃນການພົວພັນຮ່ວມມືກັບຕ່າງປະເທດ ຂອງ ສປປ ລາວເຮົາ ແມ່ນການຖືກຮັບເລືອກຕັ້ງເປັນ ຮອງປະທານສະມັດຊາໃຫຍ່ ສະຫະປະຊາຊາດ ສະໄໝທີ 76 ໃນກອງປະຊຸມແບບເປີດກວ້າງ ຂອງສະມັດຊາໃຫຍ່ສະຫະປະຊາຊາດ ປີ 2021 ທີ່ຜ່ານມາ, ໂດຍຖານະບົດບາດສຳຄັນດັ່ງກ່າວນີ້ ສປປ ລາວ ເຄີຍໄດ້ຮັບເລືອກຕັ້ງໃຫ້ເປັນຮອງປະທານສະມັດຊາໃຫຍ່ ສະຫະປະຊາຊາດ 1 ຄັ້ງ ໃນໄລຍະກອງປະຊຸມສະມັດຊາໃຫຍ່ ສະຫະປະຊາຊາດ ສະໄໝທີ 50 (ປີ 1950). ພິເສດແມ່ນ ໃນປີ 2024, ສປປ ລາວ ໄດ້ຮັບກຽດເປັນປະທານໝູນວຽນ ອາຊຽນ ຄັ້ງທີ 3, ນັບແຕ່ເຂົ້າເປັນສະມາຊິກບັນດາປະເທດອາຊຽນ ໃນປີ 1997 (ຜ່ານມາ ສປປ ລາວ ເຄີຍໄດ້ຮັບບົດບາດເປັນປະທານອາຊຽນ ແລ້ວ 2 ຄັ້ງ ໃນປີ 2004 ແລະ 2016) ໂດຍໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນຂະບວນການສ້າງປະຊາຄົມອາຊຽນ, ປະກອບສ່ວນຮັກສາ ແລະ ຊຸກຍູ້ສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາພາກພື້ນ.

ຖືໄດ້ວ່າ ບັນດາຜົນສຳເລັດ ໃນການເຄື່ອນໄຫວວຽກງານການຕ່າງປະເທດ ຂອງພັກ ແລະ ລັດ ສປປ ລາວ ໃນຕະຫຼອດໄລຍະທີ່ຜ່ານມາ ໄດ້ສະແດງໃຫ້ເຫັນເຖິງການໝູນໃຊ້ແນວຄິດ ໄກສອນ

ພົມວິຫານ ກ່ຽວກັບການສົມທົບແໜ້ນນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊິບ ໃນການກ້າວຂຶ້ນສັງຄົມນິຍົມ ຢູ່ປະເທດເຮົາໃນແຕ່ລະໄລຍະ ຂອງການປະຕິວັດ, ອັນໄດ້ປະກອບສ່ວນເຂົ້າໃນການຍົກສູງຖານະບົດ ບາດ ແລະ ຄວາມເຊື່ອໝັ້ນ ຂອງປະເທດເຮົາໃນເວທີສາກົນ, ສະໜັບສະໜູນເຊີດຊູກຽດສັກສີ ແລະ ພາລະກິດສ້າງສາພັດທະນາປະເທດຊາດ ບົນເສັ້ນທາງກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ.

2. ການເສີມຂະຫຍາຍຄຸນຄ່າແນວຄິດ ໄກສອນ ພົມວິຫານ ກ່ຽວກັບການສົມທົບແໜ້ນນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊິບ ໃນການກ້າວຂຶ້ນສັງຄົມນິຍົມ ຢູ່ປະເທດເຮົາ.

ໃນສະພາບແວດລ້ອມທີ່ທົ່ວໂລກ, ພາກພື້ນ ແລະ ປະເທດເຮົາພວມມີການປ່ຽນ ແປງຫຼາຍຢ່າງ, ອັນມີທັງການລະໂອກາດ ແລະ ສິ່ງທ້າທາຍທີ່ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດແນວທາງ, ພາລະກິດການສ້າງສາພັດທະນາປະເທດຊາດ ກ້າວຂຶ້ນສັງຄົມນິຍົມ ເທື່ອລະກ້າວນັ້ນ, ແນວຄິດ ໄກສອນ ພົມວິຫານ ກ່ຽວກັບການສົມທົບແໜ້ນນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊິບ ອັນແທ້ຈິງ ເປັນພື້ນຖານທິດສະດີທີ່ເປັນລະບົບ, ແໜ້ນໜາ, ຍາວ ນານ ໃຫ້ແກ່ຄວາມຮຽກຮ້ອງຕ້ອງການດັ່ງກ່າວ ເພື່ອສາ ມາດ ສົມທົບແໜ້ນກຳລັງແຮງພາຍໃນຊາດ ກັບກຳລັງແຮງຍຸກສະໄໝ. ດ້ວຍເຫດນັ້ນ, ເພື່ອເສີມຂະຫຍາຍຄຸນຄ່າ ຂອງແນວຄິດ ໄກສອນ ພົມ ວິຫານ ກ່ຽວກັບການສົມທົບ ແໜ້ນນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊິບອັນແທ້ຈິງ ໃນການກ້າວຂຶ້ນສັງຄົມນິຍົມ ຢູ່ປະເທດເຮົາ ໃນຕໍ່ໜ້າຄວນເອົາໃຈໃສ່ບາງເນື້ອໃນ ດັ່ງນີ້:

ໜຶ່ງ, ຖືເອົາແນວຄິດ ໄກສອນ ພົມວິຫານ ກ່ຽວກັບການ ສົມທົບແໜ້ນນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊິບ ອັນແທ້ຈິງ ເປັນພື້ນຖານທິດສະດີທີ່ສຳຄັນໃນການກຳນົດແນວທາງ, ແຜນນະໂຍບາຍການຕ່າງປະເທດຂອງພັກ ເພື່ອເປີດກວ້າງການ ພົວພັນຮ່ວມມືແບບຫຼາຍທິດ, ຫຼາຍຮູບການພົວພັນສາກົນ ໃນ ສະພາບແວດລ້ອມໃໝ່ ກໍ່ແມ່ນຄວາມຈຳເປັນພາວະວິໄສໜຶ່ງ ໂດຍ ສະເພາະໃນສະພາບແວດລ້ອມສາກົນ ແລະ ພາກພື້ນ ພວມຜັນແປ ໄປຢ່າງສັບສົນ, ຄາດເດົາໄດ້ຍາກ ຄືໃນປັດຈຸບັນ;

ສອງ, ເພີ່ມທະວີການໂຄສະນາ, ເຜີຍແຜ່ ແລະ ເຊື່ອມຊຶມ ຢ່າງເລິກເຊິ່ງ ແລະ ກວ້າງຂວາງຕໍ່ກັບແນວຄິດ, ທັດສະນະຊີ້ນຳຂອງ ປະທານ ໄກສອນ ພົມວິຫານ ຕໍ່ວຽກງານການຕ່າງປະເທດ ເວົ້າ ລວມ, ເວົ້າສະເພາະແມ່ນ ກ່ຽວກັບການສົມທົບແໜ້ນນ້ຳໃຈຮັກ ຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊິບອັນແທ້ຈິງ ກໍ່ເປັນໜຶ່ງໃນ ບັນດາເນື້ອໃນ ແລະ ໜ້າທີ່ຕົ້ນຕໍ ເພື່ອແນໃສ່ສ້າງຄວາມສາມັກຄີເປັນ ເອກະພາບ ທົ່ວປວງຊົນພາຍໃນຊາດ ແລະ ຄວາມສາມັກຄີກັບອົງ ຄະນະຍາດສາກົນ, ປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍຄວາມສາມັກຄີພາຍໃນ, ບັນດາປະເທດໃນໂລກ ແລະ ນັບມື້ຍິ່ງຍົກສູງຖານະບົດບາດຂອງ ສປປ ລາວ ໃຫ້ສູງເດັ່ນຂຶ້ນໃນ ເວທີສາກົນ;

ສາມ, ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອຄວາມ ສາມັກຄີປອງດອງຂອງປະຊາຊົນບັນດາເຜົ່າ ບົນພື້ນຖານສຳພັນທະ ພາບ ກຳມະກອນ - ຊາວນາ - ປັນຍາຊົນ ພາຍໃຕ້ການນຳພາຂອງພັກ ຖືເປັນປັດໄຈ ຕັດສິນ ແລະ ຮັບປະກັນໃຫ້ແກ່ພາລະ ກິດປ່ຽນແປງໃ ໝ່ຢ່າງຮອບດ້ານ. ນີ້ແມ່ນບັນຫາພື້ນຖານ ແລະ ສຳຄັນທີ່ສຸດ ເພື່ອຮັບ ປະກັນໃຫ້ແກ່ພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານ ຂອງພັກເຮົາ;

ສີ່, ສືບຕໍ່ເສີມຂະຫຍາຍກຳລັງແຮງ, ຄວາມສາມັກຄີປອງດອງ ພາຍໃນຊາດ ສົມ ທົບແໜ້ນກັບການສ້າງຄວາມສາມັກຄີສາກົນ ເພື່ອ ເປີດກວ້າງການພົວພັນຮ່ວມມືກັບພາຍນອກ, ຍົກສູງຖານະບົດບາດ ແລະ ອິດທິພົນຂອງປະເທດເຮົາ ໃຫ້ນັບມື້ຍິ່ງສູງເດັ່ນຂຶ້ນບົນເວທີພາກ ພື້ນ ແລະ ສາກົນ. ບົນຈິດໃຈຢຶດໝັ້ນ 6 ຫຼັກການປ່ຽນແປງໃໝ່ຂອງ ພັກ, ພິເສດແມ່ນ ຫຼັກການເຊີດຊູນ້ຳໃຈຮັກຊາດ ເອກະລາດ ເປັນເຈົ້າ ຕົນເອງ, ສົມທົບກັບກຳລັງແຮງຂອງຍຸກສະໄໝ.

ສະຫຼຸບລວມ, ໝູນໃຊ້ແນວຄິດ ໄກສອນ ພົມວິຫານ ກ່ຽວ ກັບການສົມທົບ ແໜ້ນນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນ ກຳມາຊິບອັນແທ້ຈິງ ໃນການກ້າວຂຶ້ນສັງຄົມນິຍົມ ແມ່ນບັນດາແນວ ຄິດໃນການສ້າງ, ຮັດແໜ້ນຄວາມສາມັກຄີ ຂອງກຳລັງປະຕິວັດລາວ ກັບບັນດາຊາວກຳມາຊິບ ແລະ ຊາວຜູ້ອອກແຮງງານ ໃນຂະບວນການ ຕໍ່ສູ້ປົດປ່ອຍຊາດ, ປົດປ່ອຍຊົນຊັ້ນກຳມະກອນ ຢູ່ບັນດາປະເທດທີ່ ລຸກຮື້ຂຶ້ນຕໍ່ສູ້ຕ້ານລັດທິລ່າເມືອງຂຶ້ນ, ຈັກກະພັດຜູ້ຮຸກຮານ, ກົດຂີ່ຂູດ ຮີດ ພ້ອມທັງບັນດາກຳລັງທີ່ກ້າວໜ້າ ຕໍ່ສູ້ເພື່ອສັນຕິພາບໃນທົ່ວໂລກ. ແນວຄິດ ໄກສອນ ພົມວິຫານ ກ່ຽວກັບການສົມທົບແໜ້ນນ້ຳໃຈຮັກ ຊາດ ກັບນ້ຳໃຈສາກົນກຳມາຊິບອັນແທ້ຈິງ ໃນການກ້າວຂຶ້ນສັງຄົມ ນິຍົມ ຍັງຖືເປັນມູນເຊື້ອແຫ່ງສາຍສຳພັນຮ່ວມສູ້ຮົບ ລະຫວ່າງ ສອງ ກອງ ທັບລາວ ແລະ ຫວຽດນາມ ອ້າຍນ້ອງ, ພ້ອມກັບບັນດາປະເທດ ສັງຄົມນິຍົມເພື່ອນມິດຍຸດທະສາດໃນໂລກ ແລະ ບັນດາຂະບວນການ ຕໍ່ສູ້ເພື່ອຄວາມກ້າວໜ້າ ແລະ ສັນຕິພາບ ແນໃສ່ນຳພາການປະຕິວັດ ລາວ ແລະ ພາລະກິດສ້າງສາພັດທະນາປະເທດ ກ້າວຂຶ້ນສູ່ສັງຄົມນິຍົມ ຢ່າງໜັກແໜ້ນເທື່ອລະກ້າວ.

ເອກະສານອ້າງອີງ

ຄະນະໂຄສະນາອົບຮົມສູນກາງພັກ. (2023). *ເອກະສານ ໂຄສະນາ - ປາຖະກະຖາ ອັນຊາດ ທີ 2 ທັນວາ ຄົບຮອບ 48 ປີ (2 ທັນວາ 1975 - 2 ທັນວາ 2023)*.

ສະພາແຫ່ງຊາດ. (2023, 21 ເມສາ). *ແນວຄິດປະທານ ໄກສອນ ພົມວິຫານ ໃນການສ້າງ ແລະ ຂະຫຍາຍລະບອບ ປະ ຊາທິປະໄຕປະຊາຊົນ ຕາມເສັ້ນທາງສັງຄົມນິຍົມ.* ຄົ້ນ ຫາຈາກເວັບໄຊ https://na.gov.la/ແນວຄິດປະທານ-ໄກສອນ-ພົມວິ-66/

ສະຖາບັນວິທະຍາສາດສັງຄົມແຫ່ງຊາດ. (2011). *ລະນຶກ 90 ປີ ວັນເກີດປະທານ ໄກສອນ ພົມວິຫານ*, ສູນຂ່າວສານ ສະ ຖາບັນວິທະຍາສາດສັງຄົມແຫ່ງຊາດ.

ນາວຕົວຢ່າງ, ຄ. (2008). *ປະທານ ໄກສອນ ພົມວິຫານ ຍືນຍົງ ໃນພາລະກິດປະຕິວັດອັນຍິ່ງໃຫຍ່ ຂອງປະຊາຊົນ ບັນດາເຜົ່າ ຕະຫຼອດການ*, ລັດວິສາຫະກິດໂຮງພິມສືກສາ.

ພະແນກການຕ່າງປະເທດ ນະຄອນຫລວງວຽງຈັນ. (2023). *ບົດສະຫຼຸບການເຄື່ອນໄຫວວຽກງານການຕ່າງປະເທດ ປະ ຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024*, ນະຄອນຫຼວງວຽງຈັນ, ປີ 2023.

ພົມວິຫານ, ກ. (1977). *ຕັດສິນໃຈດັດສ້າງ ແລະ ກໍ່ສ້າງ ພື້ນຖານເສດຖະກິດສັງ ຄົມນິຍົມ ຢ່າງມີໄຊ*, ສຳນັກພິມຈຳ ໜ່າຍ ສປປ ລາວ.

ພົມວິຫານ, ກ. (1979). *ບາງບົດຮຽນຕົ້ນຕໍຂອງການປະຕິວັດ ລາວ*. ສຳນັກພິມຈຳໜ່າຍ ສປປ ລາວ.

ພົມວິຫານ, ກ. (1981). *ບົນເສັ້ນທາງກ້າວຂຶ້ນສັງຄົມນິຍົມຢ່າງມີ ໄຊ*. ສຳນັກພິມຈຳໜ່າຍ ສປປ ລາວ.

ພົມວິຫານ, ກ. (1982). *ເສີມຂະຫຍາຍມູນເຊື້ອແຫ່ງຄວາມ ສາມັກຄີ ລະຫວ່າງເຜົ່າຕ່າງໆ ໃນວົງຄະນາຍາດແຫ່ງຊາດ ລາວ ທີ່ເປັນເອກະພາບ, ເດັດດ່ຽວປົກປັກຮັກສາປະເທດ ຊາດໄວ້ໃຫ້ໝັ້ນຄົງ ແລະ ກໍ່ສ້າງສັງຄົມນິຍົມໃຫ້ສຳເລັດ ຜົນ*. ສຳນັກພິມຈຳໜ່າຍ ສປປ ລາວ.

ພົມວິຫານ, ກ. (1985). *ນິພົນເລືອກເຟັ້ນ ເຫຼັ້ມ I,* ສຳນັກພິມຈຳ ໜ່າຍ ໂຮງພິມແຫ່ງລັດ.

ພົມວິຫານ, ກ. (1987). *ນິພົນເລືອກເຟັ້ນ ເຫຼັ້ມ II*. ສຳນັກ ພິມຈຳໜ່າຍ ສປປ ລາວ.

ມາກ, ກ., & ອັງແກນ, ຟ. (2010). *ນິພົນເລືອກເຟັ້ນ ເຫຼັ້ມ I.* ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ.

ມາກ., ກ. & ອັງແກນ, ຟ. (1995). *ນິພົນຄົບຊຸດ (ພາສາ ຫວຽດນາມ) ເຫຼັ້ມ IV*, ສຳນັກພິມຈາໜ່າຍການເມືອງ ແຫ່ງຊາດ.

ເລນິນ, ອ.ອ. (1980). *ນິພົນຄົບຊຸດ (ພາສາຫວຽດນາມ), ເຫຼັ້ມ 41*, ສຳນັກພິມຈາໜ່າຍກ້າວໜ້າ - ຕ່ຽນໂບ້.

ເລນິນ, ອ.ອ. (2005). *ນິພົນຄົບຊຸດ (ພາສາຫວຽດນາມ), ເຫຼັ້ມ II*, ສຳນັກພິມຈາໜ່າຍ ການເມືອງແຫ່ງຊາດ-ສໍ້ ເຖີດ.

ເລນິນ, ອ.ອ. (2006). *ນິພົນຄົບຊຸດ (ພາສາຫວຽດນາມ), ເຫຼັ້ມ XXX*, ສຳນັກພິມຈາໜ່າຍ ການເມືອງແຫ່ງຊາດ-ສໍ້ ເຖີດ.

ຫໍພິພິດຕະພັນ ໄກສອນ ພົມວິຫານ. (2020). *ປະຫວັດຫຍໍ້ທີ່ ປະທານ ໄກສອນ ພົມວິຫານ.* ໂຮງພິມແຫ່ງລັດ.

ໂຮ່ຈີມິນ. (2018). *ນິພົນຄົບຊຸດ ເຫຼັ້ມ 2 (1924-1929)*. ສຳນັກພິມຈຳໜ່າຍການເມືອງແຫ່ງຊາດ.

ໂຮ່ຈີມິນ. (2019). *ນິພົນຄົບຊຸດ (ພາສາລາວ) ເຫຼັ້ມ 12 (1959-1960).* ສຳນັກພິມຈາໜ່າຍການເມືອງແຫ່ງ ຊາດ.

People's Army Newspaper. (2023, 25 August). Promoting the pure spirit of proletarian internationalism. Retrived from https://www.qdnd.vn/ quoc-te/binh-luan/phat-huy-tinh-than-quoc-te-vo-san-trong-sang-447371